## ວັດຈະນານຸກົມ

# ພາສາລາວ

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

2012



ຕົ້ນໄມ້ ມະນີໂຄດ

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

# ວັດຈະນານຸກົມພາສາລາວ

ເລກທະບຽນການພິມ: 325/ພຈ 26.07.2012
ພິມທີ່ : ໂຮງພິມແຫ່ງລັດ
ຈຳນວນພິມ : 800 ຫົວ
ຂະໜາດປຶ້ມ : 19 x 25 ຊມ
ພິມເທື່ອທີ່ໜຶ່ງ
ຈຳນວນຄຳປະມານ 33.000 ຄຳ

ປີພິມ 2012

ສະຫງວນລິຂະສິດຂອງຄະນະປະຕິບັດໂຄງການ

# ວັດຈະນານຸກົມພາສາລາວ

**ທີ່ເປີກສາ:**

**ທ່ານ ດຣ. ຄຳເຜີຍ ປານມະໄລທອງ ປະທານສະຖາບັນວິທະຍາສາດສັງຄົມແຫ່ງຊາດ**

**ຜູ້ກຳກັບແລະປະຕິບັດ:**

**ທ່ານ ສິນແສງ ໄຊຍະວົງ** ຫົວໜ້າສະຖາບັນຄົ້ນຄວ້າວັດທະນະທຳ, ນັກພາສາສາດ.

**ຜູ້ຈັດແຈງ, ຊ່ວຍວິຊາການ, ເຕັກນິກແລະອອກແບບ:**

**ທ່ານ ອຸດົມ ຫຼວງສີສົງຄາມ** ວິຊາການດ້ານອັກສອນສາດ-ສຶກສາສາດ.
**ທ່ານ ແພງຢ່າງ ເກຍປາວ** ວິຊາການດ້ານອັກສອນສາດ-ສຶກສາສາດ.

**ຄະນະຮ່ວມມືດ້ານວິຊາການ, ກວດແກ້ແລະໃຫ້ຄຳເຫັນ:**

**ທ່ານ ດຣ. ທອງເພັດ ກິ່ງສະດາ** ຜູ້ຊ່ວຍວຽກປະທານສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ນັກພາສາສາດ.

**ທ່ານ ສຈ.ດຣ ບົວລີ ປະພາພັນ** ຫົວໜ້າພາກພາສາລາວ-ສື່ມວນຊົນ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ, ນັກພາສາສາດ.

**ທ່ານ ຮສ.ດຣ ບຸນຍໍ ພົມມະບຸດ** ຮອງຄະນະບໍດີ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ, ຊ່ຽວຊານດ້ານວັນນະຄະດີລາວ.

**ທ່ານ ຮສ. ບຸນເລີດ ແສງສຸລິນ** ຮອງຄະນະບໍດີ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ, ຊ່ຽວຊານພາສາລາວ.

**ທ່ານ ສີສະເຫວີຍ ສຸວັນນີ** ຊ່ຽວຊານອາວຸໂສດ້ານປາລີ-ສັນສະກິດແລະພາສາລາວ.

**ທ່ານ ແສງຈັນ ສຸຂະເສມ** ອາຈານຊຳນານດ້ານພາສາຝຣັ່ງ, ຊ່ຽວຊານພາສາລາວ ປະຈຳສະຖານທູດຝຣັ່ງ.

## ຜູ້ບໍລິຫານໂຄງການ:

**ທ່ານ ບຸນໄຊຊິ່ງ ເນັງຊາຍູ** ວິຊາການອັກສອນສາດ(ພາສາລາວ-ວັນນະຄະດີ).

# ຄຳນຳ

ພາສາລາວ ເປັນພາສາທີ່ບັນດາເຜົ່າໃນລາວໃຊ້ເປັນພາສາກາງສຳລັບຕິດຕໍ່ສື່ສານກັນແລ້ວຍັງໄດ້ຮັບການກຳນົດໃຫ້ເປັນພາສາແຫ່ງຊາດທີ່ໃຊ້ໃນວຽກງານທາງລັດຖະການ, ວຽກງານທາງສັງຄົມ ວິທະຍາສາດແລະທຸລະກິດ ສະນັ້ນ ຈຶ່ງເປັນພາສາທີ່ສຳຄັນຂອງຊາດເຊິ່ງທຸກຄົນມີໜ້າທີ່ຕ້ອງຮຽນຮູ້, ປົກປັກແລະສົ່ງເສີມ ເພື່ອໃຫ້ພາສາແຫ່ງຊາດຂອງຕົນມີຄວາມອຸດົມສົມບູນ ທັງຂະຫຍາຍໂຕຍິ່ງໆຂຶ້ນ.

ການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້ ໄດ້ເປັນກິດຈະການຢ່າງໜຶ່ງທີ່ມີຄວາມສຳຄັນໃນການເຮັດໃຫ້ຮູ້ແລະເຂົ້າໃຈຢ່າງຖືກຕ້ອງຕໍ່ຄຳໃນພາສາຂອງຊາດດີຂຶ້ນແລະເປັນການປົກປັກພາສາ ເຊິ່ງເລີ່ມຈາກການເກັບກຳຄຳຕ່າງໆແລະວິເຄາະຄວາມໝາຍອັນມູນຖານສ້າງເປັນຄຳນິຍາມໄວ້, ຄວາມໝາຍຂອງແຕ່ລະຄຳນັ້ນ ໄດ້ມີຄ່າທີ່ສະທ້ອນໃຫ້ເຫັນຄວາມນຶກຄິດ, ຄວາມຮັບຮູ້, ການເບິ່ງໂລກຫຼືວັດທະນະທຳຂອງການເຮັດ, ການສ້າງສາ, ສິ່ງຂອງທຳມະຊາດໃນບ້ານເມືອງຂອງລາວ, ຄວາມຫຼາກຫຼາຍແລະຮັ່ງມີຂອງຄຳໃນພາສາລາວໄດ້ສະແດງເຖິງຄວາມອຸດົມສົມບູນແລະສວຍງາມຂອງພາສາລາວ.

ວັດຈະນານຸກົມພາສາລາວເຫຼັ້ມນີ້ ເຮັດຂຶ້ນຈົນສຳເລັດໄດ້ດ້ວຍຄວາມຕັ້ງໜ້າຂອງຊຸມນັກວິຊາການໃນສະຖາບັນຄົ້ນຄວ້າພາສາສາດໃນເມື່ອກ່ອນ ເຊິ່ງສົມທົບກັບນັກວິຊາການຈາກພາກສ່ວນອື່ນ ເລີ່ມແຕ່ເຮັດການເກັບກຳຄຳຈາກເອກະສານຄຳສັບຂອງພາສາລາວແຕ່ລະສະບັບແລະເອກະສານທີ່ເປັນພາສາລາວຫຼາຍຊະນິດ ນຳມາຄັດເລືອກຄຳ ກວດແກ້ ປັບປຸງຄຳນິຍາມ, ຊອກແລະເກັບກຳຄຳໃໝ່ ໂດຍສະເພາະໃນ 60 ປີຜ່ານມາ ລາວໄດ້ສ້າງຄຳຂຶ້ນໃຊ້ໄດ້ຕັ້ງຫຼາຍພັນ ແຕ່ບໍ່ທັນມີຜູ້ເກັບກຳແລະສ້າງຄວາມອະທິບາຍຫຼືຊີ້ແຈງຄວາມໝາຍດ້ວຍວິຊາການຈັດແບບແລ້ວນຳມາບັນຈຸເຂົ້າໃນວັດຈະນານຸກົມພາສາລາວເຫຼັ້ມໃດມາເທື່ອ. ເຫັນວ່າ ໃນວັດຈະນານຸກົມນີ້ມີຄຳທີ່ເກັບກຳນຳມາບັນຈຸໄດ້ຫຼາຍ ແມ່ນຜົນສຳເລັດທີ່ດີທັງເປັນພື້ນຖານອັນໜັກແໜ້ນດ້ານຄັງຄຳ ເປັນຫຼັກແລະແຫຼ່ງຄຳສຳລັບສະໜອງໃຫ້ແກ່ການໃຊ້ຄຳໃນພາສາລາວໄດ້ດີແລະຖືກຕ້ອງ ເພື່ອສ້າງຄວາມເປັນເອກະພາບກັນທົ່ວສັງຄົມ.

ໃນໂອກາດນີ້ ໃນນາມປະທານສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຈຶ່ງຂໍສະແດງຄວາມຊົມເຊີຍມາຍັງຄະນະນັກວິຊາການພາສາສາດຜູ້ທີ່ໄດ້ປະຕິບັດວຽກໃນການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້ໃຫ້ເກີດເປັນຮູບປະທຳ, ເປັນຜົນງານໃໝ່ທີ່ມີປະໂຫຍດຫຼາຍຕໍ່ພາສາລາວແລະໃຫ້ສັງຄົມລາວ. ຂໍຊົມເຊີຍບັນດາທ່ານຊ່ຽວຊານ ຜູ້ທີ່ຊົງຄວາມຮູ້, ອາຈານທີ່ມີຄວາມອາວຸໂສທາງພາສາລາວຈາກສະຖາບັນການສຶກສາ, ມະຫາວິທະຍາໄລແຫ່ງຊາດແລະພາກສ່ວນຕ່າງໆທີ່ໄດ້ໃຫ້ການປະກອບສ່ວນທາງເຫື່ອແຮງແລະສະຕິປັນຍາເຂົ້າໃນການກວດແກ້ທັງໃຫ້ຄວາມຮູ້ ຄຳຄິດເຫັນຫຼາຍຢ່າງແກ່ການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້.

ຂໍໃຫ້ພາລະກິດດັ່ງກ່າວຈົ່ງໄດ້ດຳເນີນຕໍ່ໄປເພື່ອໃຫ້ພາສາລາວໄດ້ຮັບການສົ່ງເສີມແລະພັດທະນາຄັງຄຳສັບໃຫ້ອຸດົມຮັ່ງມີຍິ່ງຂຶ້ນ ສາມາດຕອບໄດ້ຕໍ່ຄວາມຕ້ອງການຂອງຜູ້ໃຊ້ພາສາລາວແລະຕໍ່ສັງຄົມຂອງລາວຕໍ່ໄປ.

**ປະທານສະຖາບັນວິທະຍາສາດສັງຄົມແຫ່ງຊາດ**

**ດຣ.ຄຳເຜີຍ ປານມະໄລທອງ**

# ອາລຳພະບົດ

ພາສາລາວເປັນພາສາທີ່ເກົ່າແກ່ແລະເປັນພາສາກຸ່ມໃຫຍ່ໃນຕະກຸນພາສາໄຕ(Tai-Language Family) ປັດຈຸບັນໄດ້ຮັບເປັນພາສາກາງສຳລັບໃຊ້ໃນວຽກງານລັດຖະການແລະໃຊ້ຕິດຕໍ່ສື່ສານໃນທຸກວຽກງານທາງສັງຄົມໃນ ສປປ ລາວ.

ໂດຍຜ່ານການໃຊ້ໄດ້ຫຼາຍສະຕະວັດ ພາສາລາວກໍ່ຍິ່ງອຸດົມສົມບູນຈາກການພັດທະນາດ້ວຍຄົນລາວທີ່ໄດ້ສ້າງຄຳສັບໃໝ່ແລະຮັບເອົາຄຳຈາກພາສາອື່ນມາໃຊ້ໃຫ້ພຽງພໍກັບຄວາມຕ້ອງການສື່ສານໃນແຕ່ລະຍຸກ; ຄວາມອຸດົມສົມບູນທີ່ວ່ານີ້ແມ່ນເຫັນໄດ້ດ້ວຍສິ່ງທີ່ມີໃນພາສາລາວຄື ມີຄຳຕັ້ງຫຼາຍໝື່ນ, ມີທຸກຊະນິດຄຳ ທຸກໝວດແລະແບບການໃຊ້ພາສາມີຫຼາຍແບບຫຼາຍສຳນວນ ເຊັ່ນ: ຄຳປະພັນ, ຄຳສອນ, ຄຳໂສກ, ຄຳໂອມ, ຄຳຜະຫຍາ, ສຸພາສິດ, ຄຳຂັບລຳແລະສາມາດໃຊ້ພາສາລາວເຂົ້າໃນວຽກການສຶກສາຄົ້ນຄວ້າທາງວິທະຍາສາດດ້ານຕ່າງໆ ດັ່ງໃນຍຸກປັດຈຸບັນຍິ່ງເຫັນໄດ້ວ່າ ພາສາລາວມີການຂະຫຍາຍໂຕແລະມີບົດບາດຕໍ່ສັງຄົມລາວທີ່ສຸດ.

ການສ້າງວັດຈະນານຸກົມເປັນວຽກໜັກທີ່ຈະສ້າງຫຼັກອັນສຳຄັນໃຫ້ການໃຊ້ພາສາແຫ່ງຊາດ ມີຄວາມເປັນເອກະພາບ. ວັດຈະນານຸກົມທີ່ມີຄຳຢ່າງອຸດົມສົມບູນ ມີຄຳອະທິບາຍຫຼືຊີ້ແຈງຈະແຈ້ງຄົບຖ້ວນແລະຖືກໂລຊິກ, ມີໂຕຢ່າງ, ສົມບູດປະກອບໃນຄຳທີ່ເໝາະສົມກໍ່ຈະມີຄ່າທາງວິຊາການສູງ. ການເຮັດວັດຈະນານຸກົມໄດ້ໃຊ້ຄວາມຮູ້ຫຼາຍປະການ ໂດຍສະເພາະແມ່ນຄວາມຮູ້ພາສາ, ວັດຈະນານຸກົມວິທະຍາ; ມີປະສົບການແລະມີຄວາມຮູ້ທາງປັດຊະຍາກ່ຽວກັບໂລຊິກກໍ່ຈະເຮັດໃຫ້ເກີດປະສິດທິພາບທີ່ດີກວ່າ.

ການເຮັດວັດຈະນານຸກົມໃນປັດຈຸບັນ ບໍ່ແມ່ນໄດ້ເລີ່ມເຮັດແຕ່ຕົ້ນທຸກຢ່າງ ໂດຍພື້ນຖານແມ່ນມີວັດຈະນານຸກົມໃນລະດັບໃດໜຶ່ງແດ່ແລ້ວ. ສຳລັບລາວເຮົາກໍ່ມີຂໍ້ມູນພາສາທີ່ເປັນວັດຈະນານຸກົມຈຳນວນໜຶ່ງທີ່ຈະເປັນສິ່ງສະໜັບສະໜູນແກ່ການເລືອກແລະເພີ່ມຄັງຄຳໃຫ້ໄດ້ປະລິມານຫຼາຍແລະສ້າງຄຸນະພາບອັນໃໝ່ໃຫ້ແກ່ພາສາແຫ່ງຊາດ.

ການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້ແມ່ນ ດ້ານຮູບແບບແມ່ນ ຮັກສາພື້ນຖານຂອງວັດຈະນານຸກົມພາສາລາວທີ່ມີແລ້ວແຕ່ໄດ້ຈັດລະບົບຄຳແລະຄຳໃນນິຍາມໃຫ້ເປັນລະ

ລະບົບແລະໃຫ້ຄົບຖ້ວນ ຈະແຈ້ງ ຊັດເຈນ ຖືກຕາມໂລຊິກ; ປະກອບໂຕຢ່າງ, ສົມມຸດແລະຮູບເຂົ້າໃຫ້ເໝາະສົມ. ສະນັ້ນ ການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້ໄດ້ມີວຽກໜັກຫຼາຍຢ່າງນັບແຕ່ການກຳກັບການສະກົດຄຳ, ການກຳນົດເອົາຄຳທີ່ຖືກຕ້ອງ, ການຈັດລຳດັບຄຳ ເຊິ່ງກ່ຽວກັບການຈັດພະຍັນຊະນະແລະສະຫຼະຂອງພາສາລາວໃຫ້ເປັນລະບົບຕາມຫຼັກພາສາສາດ; ການກຳນົດຄຳຫຼັກ, ຄວາມໝາຍຫຼັກແລະຄວາມໝາຍຮອງ, ການແບ່ງຄວາມໝາຍຂອງບາງຄຳ, ການນິຍາມຄວາມໝາຍຂອງຄຳໃຫ້ຖືກຕ້ອງ, ການໃຊ້ໂຕຢ່າງຫຼືສົມມຸດແລະການຫາຄຳໃໝ່ ສ້າງຄຳນິຍາມໃໝ່ກໍ່ໄດ້ປະຕິບັດຕາມຫຼັກການດຽວກັນ.

ຜ່ານການປະຕິບັດໄດ້ເຮັດໃຫ້ວັດຈະນານຸກົມພາສາລາວເຫຼັ້ມນີ້ ມີຮູບແບບຕ່າງກັບວັດຈະນານຸກົມພາສາລາວສະບັບທີ່ເຮັດຜ່ານມາຫຼາຍປະການ ເຊັ່ນ: ການຈັດລຳດັບຄຳ, ກຸ່ມພະຍັນຊະນະ, ການກຳນົດຊະນິດຄຳ, ນິຍາມຄວາມໝາຍຂອງຄຳ ຕະຫຼອດເຖິງການໃຊ້ໂຕຢ່າງ, ສົມມຸດ ກໍ່ມີແບບແລະສິ່ງທີ່ຕ່າງຈາກເດີມຫຼາຍ ແຕ່ຈະຊ່ວຍໃຫ້ຄວາມສະດວກແກ່ຜູ້ໃຊ້ໃນການຊອກຫາຄຳໃດໜຶ່ງ, ສາມາດແກ້ໄຂການຈັດຄຳເກົ່າແບບຊໍ້າຊ້ອນດັ່ງວັດຈະນານຸກົມພາສາລາວຫຼາຍເຫຼັ້ມທີ່ເຮັດອອກຜ່ານມາໄດ້ມີກໍລະນີເຊັ່ນນີ້. ພ້ອມນີ້ກໍ່ມີຄຳໃໝ່ທີ່ເປັນຄຳທາງວິຊາການທາງສັງຄົມ, ການເມືອງ, ເສດຖະກິດແລະອື່ນໆພ້ອມກັບຄຳນິຍາມຂອງແຕ່ລະຄຳຢ່າງຄົບຖ້ວນແຈ່ມແຈ້ງ.

ວັດຈະນານຸກົມພາສາລາວເຫຼັ້ມນີ້ໄດ້ນຳໃຊ້ຫຼັກການສະກົດຄຳຕາມສຽງການໆທີ່ເປັນພື້ນຖານຂອງຄຳນັ້ນໆເປັນຫຼັກ ໃນນັ້ນໄດ້ໃຊ້ພະຍັນຊະນະ ຣ ແລະພະຍັນຊະນະທີ່ຄວບດ້ວຍສຽງ ຣ ຫຼື ລ, ໃຊ້ພະຍັນຊະນະອື່ນອັນທີ່ຕ່າງກັບໂຕສະກົດທັງ ແປດ ຂອງພາສາລາວສະກົດສຳລັບຄຳທີ່ເປັນຄຳທາງວິທະຍາສາດ, ຊື່ສະເພາະບຸກຄົນ, ສະຖານທີ່ ທີ່ສາກົນໃຊ້ແລະຄຳຊົນເຜົ່າ. ການສະກົດຄຳຕາມຫຼັກການນີ້ ໄດ້ເຮັດໃຫ້ການຂຽນຄຳບາງຄຳທີ່ມັກເກີດການຂັດສົນໄດ້ຮັບການແກ້ໄຂຢ່າງແທດເຖິງແລະຄ່ອງ.

ກ່ຽວກັບຄຳຫຼັກ ແມ່ນຖືເອົາຕາມທີ່ໃຊ້ຄຳນັ້ນສື່ສານໂຕຈິງ ຫາກຄຳເຕັມມີຮູບແບບໃດກໍ່ເອົາຕາມຮູບແບບນັ້ນ ໝາຍວ່າ ບໍ່ໃຫ້ມີການຕັດສ່ວນຂອງຄຳ ຫາກຕັດສ່ວນຂອງຄຳອອກຈະເປັນຄຳບໍ່ເຕັມແລະຈະບໍ່ຮັບເປັນຄຳຫຼັກໄດ້.

ການນິຍາມຄວາມໝາຍຂອງຄຳເປັນວຽກຕົ້ນຕໍ ທັງເປັນວຽກໜັກໃນການເຮັດວັດຈະນານຸກົມທີ່ມີຂະໜາດໃຫຍ່. ຄະນະນັກວິຊາການໄດ້ໃຊ້ຄວາມພະຍາຍາມຕຶກຕອງໂດຍອີງໃສ່

ຫຼັກວິຊາພາສາສາດຫາໃຫ້ໄດ້ອັນທີ່ເປັນຄວາມໝາຍສະເພາະຫຼືເໝາະເຈາະແລ້ວທຶບທວນເບິ່ງຄວາມຖືກຕ້ອງ ຊັດເຈນຫຼາຍທີ່ນ ໂດຍເບິ່ງການວາງຄຳໃນປະໂຫຍກທີ່ເປັນນິຍາມຄວາມໝາຍບໍ່ໃຫ້ກວມເອົາຄຳອື່ນທີ່ໃກ້ຄຽງແລະເບິ່ງຄວາມລະອຽດດ້ານຕ່າງໆທີ່ກ່ຽວກັບຄຳສັບ, ເອົາໃຈໃສ່ການໃຊ້ເຄື່ອງໝາຍການຂຽນ ເຊັ່ນ: ຈ້ຳ, ຈ້ຳຈຸດ, ຍະຫວ່າງ, ວົງເລັບແລະການໃຊ້ຄຳເຊື່ອມ, ຄຳຕໍ່. ແຕ່ລະເຄື່ອງໝາຍໄດ້ມີບົດບາດຕໍ່ການກຳນົດໝວດໝູ່ຂອງຄວາມໝາຍ, ຂອງຖ້ອຍຄຳໃນນິຍາມ. ແຕ່ເຖິງຢ່າງໃດສິ່ງທີ່ບົກຜ່ອງກໍ່ຍັງຈະມີຫຼາຍປະການ.

ການເຮັດວັດຈະນານຸກົມພາສາລາວເຫຼັ້ມນີ້ ແມ່ນໄດ້ຮັບການກວດດ້ວຍຄະນະນັກວິຊາການດ້ານພາສາສາດ-ພາສາລາວ, ຜູ້ທີ່ມີຄວາມຮູ້ກ່ຽວກັບປາລີ-ສັນສະກິດ, ມີປະສົບການໃນການຄົ້ນຄວ້າຫຼືສິດສອນພາສາລາວໃນຂັ້ນມະຫາວິທະຍາໄລຢ່າງໜ້ອຍ 25 ປີຂຶ້ນໄປ. ຄະນະດັ່ງກ່າວໄດ້ຮັບການແຕ່ງຕັ້ງຈາກທ່ານປະທານ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ. ໃຊ້ເວລາກວດແກ້ຫຼາຍເດືອນ ຕໍ່ມາກໍ່ໄດ້ເກັບກຳສິ່ງທີ່ກວດໂຕທີ່ມີຄຳເຫັນຍັງແຕກຕ່າງກັນແລ້ວນຳມາຈັດປະຊຸມກັນແກ້ໄຂ ໃນທີ່ສຸດທຸກສິ່ງແມ່ນໄດ້ຮັບການຕົກລົງຢ່າງເອກະພາບ.

ການເຮັດວັດຈະນານຸກົມພາສາລາວສຳເລັດໄດ້ຂັ້ນນີ້ ກໍ່ສະແດງເຖິງຄວາມເຫັນໄດ້ຕໍ່ຄວາມສຳຄັນແລະຍາກປົກປັກ-ສົ່ງເສີມພາສາລາວໂດຍຄະນະນຳສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຈຶ່ງໄດ້ໃຫ້ໂອກາດແລະເງື່ອນໄຂທີ່ດີແກ່ຄະນະນັກວິຊາການພາສາສາດໄດ້ປະຕິບັດວຽກນີ້ມາຈົນສຳເລັດ.

ທາງສະຖາບັນຄົ້ນຄວ້າພາສາສາດ ຂໍສະແດງຄວາມຂອບໃຈນຳບັນດາທ່ານທີ່ໄດ້ປະກອບຄວາມສາມາດແລະສະຕິປັນຍາເຂົ້າໃນການກວດແກ້ແລະຕົກລົງສິ່ງຕ່າງໆໃນໜ້າວຽກຂອງວັດຈະນານຸກົມເຫຼັ້ມນີ້; ຂໍສະແດງຄວາມຮູ້ບຸນຄຸນຕໍ່ບັນດາທ່ານທີ່ໄດ້ສ້າງຂໍ້ມູນເປັນວັດຈະນານຸກົມພາສາລາວສະບັບຕ່າງໆຜ່ານມາ ເຊັ່ນ: ວັດຈະນານຸກົມພາສາລາວ ຂອງອາຈານ ມະຫາສິລາ ວີຣະວົງ, ວັດຈະນານຸກົມພາສາລາວ-ອັງກິດຂອງທ່ານ ອາເລນດີ-ແຄຣ, ວັດຈະນານຸກົມລາວ-ຣັດເຊຍ ຂອງທ່ານ ລ.ນ ໂມເລັບ, ວ.ຣ ວາຊິເລວາ ແລະຢູ-ຍາ ປລຳ, ວັດຈະນານຸກົມພາສາລາວຂອງທ່ານ ສີວຽງແຂກ ກອນນີວົງ, ວັດຈະນານຸກົມລາວ-ໄທ-ອັງກິດຂອງຄະນະອາຈານພາກພາສາສາດມະຫາວິທະຍາໄລກະເສດສາດທີ່ໄດ້ເປັນແຫຼ່ງຄວາມຮູ້, ບົດຮຽນແລະຂໍ້ມູນຈຳນວນໜຶ່ງ; ໃນນັ້ນຂໍສະແດງຄວາມຂອບໃຈແລະຮູ້ບຸນຄຸນເປັນພິເສດຕໍ່ທ່ານ ດຣ. ທອງຄຳ ອ່ອນມະນີສອນ ທີ່ໄດ້ໃຫ້ຄຳອະນຸຍາດໃຊ້ວັດຈະນານຸກົມພາສາລາວທີ່

ທ່ານເຮັດໃນປີ 1992 ໃຫ້ທາງສະຖາບັນຄົ້ນຄວ້າພາສາສາດຄັດເລືອກຄໍາແລະໃຫ້ເປັນຂໍ້ມູນຫຼາຍຢ່າງແກ່ການສ້າງວັດຈະນານຸກົມພາສາລາວເຫຼັ້ມນີ້.

ເນື່ອງດ້ວຍວ່າ ວັດຈະນານຸກົມພາສາລາວເຫຼັ້ມນີ້ໄດ້ເປັນເຫຼັ້ມເບື້ອງຕົ້ນທີ່ພວກເຮົາເຮັດ ສະນັ້ນ ຄໍາທີ່ນໍາມາບັນຈຸກໍ່ຍັງບໍ່ໄດ້ຄົບຕາມທີ່ພາສາລາວມີ, ນອກນັ້ນ ໃນສ່ວນຂອງນິຍາມແລະການຈັດແຈງກໍ່ຄົງມີສິ່ງຜິດຫຼືພາດຫຼາຍປະການ. ດັ່ງນັ້ນ ເມື່ອທ່ານໄດ້ໃຊ້ຫາກພົບເຫັນສິ່ງທີ່ຜິດ, ບົກຜ່ອງຫຼືບໍ່ຄົບຖ້ວນ ຂໍໃຫ້ບັນທຶກເປັນຂໍ້ຄວາມແລ້ວສະເໜີໄປຍັງຄະນະປະຕິບັດໂຄງການວັດຈະນານຸກົມພາສາລາວ ພວກເຮົາຍິນດີຮັບເອົາຄໍາຕໍາໜິທີ່ສົມເຫດສົມຜົນຂອງທ່ານແລ້ວຈະນໍາ ໄປແກ້ໄຂໃນເວລາປັບປຸງປຶ້ມນີ້ເພື່ອການພິມຄັ້ງຕໍ່ໄປ.

ນະຄອນວຽງຈັນ, ວັນທີ 11/1/2011

**ຄະນະປະຕິບັດໂຄງການວັດຈະນານຸກົມພາສາລາວ**



ສົມແສງ ໄຊຍະວົງ

# ຂໍ້ຄວາມກ່ຽວກັບການຈັດແຈງແລະການໃຊ້ວັດຈະນານຸກົມພາສາລາວ

## I. ຈຸດປະສົງ

1. ເພື່ອເປັນຄັງສັບທີ່ປະກອບດ້ວຍຄຳອະທິບາຍທີ່ຖືກຕ້ອງຄົບຖ້ວນແລະມີໂຕຢ່າງ, ຫຼືສົມມຸດປະກອບເຮັດໃຫ້ເກີດຄວາມສົມບູນຊັດເຈນ.

2. ເພື່ອໃຫ້ເປັນວັດຈະນານຸກົມພາສາລາວ ທີ່ມີຄຳຫຼາຍ, ໄດ້ໃຊ້ວິຊາການກຳກັບຄຳນິຍາມແລະສ່ວນຕ່າງໆເປັນຢ່າງດີ, ມີຄວາມເຊື່ອຖືໄດ້ແລະເປັນຫຼັກໃຫ້ແກ່ການໃຊ້ຄຳໃນພາສາລາວຍຸກປັດຈຸບັນ.

3. ເພື່ອຮົບໂຮມຄຳໃນພາສາລາວໃຫ້ໄດ້ຫຼາຍເປັນພື້ນຖານສຳລັບຂະຫຍາຍການເກັບກຳແລະປະກອບຄຳເຂົ້າຕື່ມໃນພາຍໜ້າ ເພື່ອເປັນຄັງສາງດ້ານຄຳສຳລັບໃຫ້ສັງຄົມໄດ້ໃຊ້ເຂົ້າໃນການຮຽນ, ການຄົ້ນຄວ້າ, ການສອນ, ການຂຽນຂຽນແລະການເວົ້າພາສາລາວ.

## II. ເປົ້າໝາຍ

1. ເປົ້າໝາຍດ້ານຄຳສັບ

1).ຮົບໂຮມຄຳແລະປະກອບຄຳນິຍາມໃຫ້ໄດ້ຫຼາຍກວ່າ 30.000 ຄຳ ຈາກວັດຈະນານຸກົມພາສາລາວສະບັບຕ່າງໆແລະເອກະສານພາສາລາວຫຼາຍສະບັບທີ່ມີມາ.

2). ຫາຄຳໃໝ່ຊຸມທີ່ກ່ຽວກັບສັງຄົມ ວັດທະນະທຳແລະວິຊາຕ່າງໆ ເຊັ່ນ: ພູມສາດ, ມະນຸດສາດ, ການເມືອງ, ສັງຄົມ, ພາສາສາດ, ເຕັກນິກ; ຄຳດ້ານວິທະຍາສາດທຳມະຊາດ ເຊັ່ນ: ເຄມີ, ຊີວະສາດ, ຟີຊິກ, ຄະນິດສາດ, ເອກເລັກຕະໂຣນິກຈຳນວນໜຶ່ງ ທີ່ເປັນຄຳໃຊ້ເລື້ອຍໆແຕ່ບໍ່ທັນໄດ້ບັນຈຸເຂົ້າໃນວັດຈະນານຸກົມພາສາລາວຜ່ານມາ ເພື່ອເປັນພື້ນຖານໃຫ້ແກ່ການຈະຮົບໂຮມເອົາຄຳວິຊາການອື່ນໆໃນແວດວົງນີ້ເຂົ້າຕື່ມຕໍ່ໄປ.

2. ເປົ້າໝາຍທາງວິຊາການ

1). ສ້າງຄວາມເປັນລະບົບໃນການກຳນົດຄຳຫຼັກ, ຊະນິດຄຳ, ການນິຍາມຄວາມ

ໝາຍຂອງຄຳ, ການຈັດລຳດັບຄຳໃຫ້ຈະແຈ້ງ, ຊັດເຈນ.

2). ກຳກັບການເລືອກຄຳ, ການໃສ່ໂຕຢ່າງ, ສົມມຸດ, ຮູບ, ເຄື່ອງໝາຍວັກຕອນແລະເຄື່ອງໝາຍຕ່າງໆກ່ຽວກັບການຂຽນ; ການສະກົດຄຳທີ່ເປັນຊື່ທາງເຄມີ, ພູມສາດ, ວິທະຍາສາດ, ຊື່ບຸກຄົນ,ເຜົ່າທີ່ສາກົນໃຊ້ແມ່ນປະຕິບັດຕາມຫຼັກອັກຂະຫຼະວິທີຂອງພາສາລາວປັດຈຸບັນ, ໃນນັ້ນສິ່ງທີ່ເອົາໃຈໃສ່ທີ່ສຸດຢ່າງໜຶ່ງຄື ການກຳນົດຄວາມໝາຍຫຼັກແລະຄວາມໝາຍຮອງ, ສຳລັບຄຳຫຼັກແມ່ນເອົາຕາມຮູບຄຳເຕັມ(full form)ທັງຄຳດ່ຽວຫຼືຄຳປະສົມກໍ່ຍຶດຖືຕາມຫຼັກນີ້.

3). ຄຳວິຊາການທີ່ສາກົນໃຊ້, ອັກສອນຫຍໍ້, ຄຳຫຍໍ້ທີ່ມີໃນພາສາລາວແລະອັນທີ່ຮັບມາຈາກພາສາອື່ນທີ່ປາກົດເລື້ອຍໃນຊີວິດສັງຄົມ, ໃນເອກະສານຫຼາຍຢ່າງແມ່ນເປົ້າໝາຍໃໝ່ທີ່ເກັບກຳມາບັນຈຸເຂົ້າໃນວັດຈະນານຸກົມນີ້ໃຫ້ໄດ້ຫຼາຍ.

## III. ຫຼັກການຕ່າງໆທີ່ໃຊ້ໃນການຈັດວັດຈະນານຸກົມສະບັບນີ້

1. ການໃຊ້ອັກສອນຫຍໍ້ຂຽນໝາຍຊະນິດຄຳມີຄືດັ່ງນີ້:

| ອັກສອນຫຍໍ | ຄຳເຕັມ | ອັກສອນຫຍໍ້ | ຄຳເຕັມ |
|---|---|---|---|
| ນ | ນາມ | ກ | ກຳມະ |
| ທນ | ແທນນາມ | ລນ | ລັກສະນະນາມ |
| ບ | ບຸບພະບົດ | ສັນ | ຄຳເຊື່ອມ, ຄຳຕໍ່ |
| ວ | ຄຳວິເສດ | ຄ | ຄຳຄຸນນາມ |
| ຖ | ຄຳຖາມ | ອຸ | ຄຳອຸທານ, ຄຳນາມໜ້າຊື່ຄົນ |
| ສວ | ສຳນວນວະລີ | ຊ | ຊ່ວຍ |
| ຮຂ | ຮອງຂໍ | ສ | ສັບພະນາມ |
| ຊນ | ຊ່ວຍຄຳນາມ | ນວ | ນາມວະລີ |
| ຊກ | ຄຳຊ່ວຍກິລິຍາ | ສວ | ສຳນວນວະລີ |

2. ການຈັດລຳດັບຄຳ

ການຈັດລຳດັບຄຳໃນວັດຈະນານຸກົມເຫຼັ້ມນີ້ ໄດ້ອີງໃສ່ລຳດັບຂອງພະຍັນຊະນະດັ່ງທີ່ເຄີຍຈັດໃນວັດຈະນານຸກົມອື່ນຜ່ານມາເປັນຫຼັກແຕ່ໄດ້ມີການຈັດເອົາພະຍັນຊະນະທີ່

ເປັນໜ່ວຍສຽງຄູ່ກັນໃຫ້ຢູ່ເປັນຄູ່ຕາມໜ່ວຍສຽງໃດໜ່ວຍສຽງນັ້ນແລະການຈັດລຳດັບສະຫຼະກໍ່ອີງໃສ່ລຳດັບທີ່ເຄີຍຈັດມາແຕ່ເມື່ອນຳສະຫຼະໃດໜຶ່ງມາປະກອບແລ້ວກໍ່ຕາມດ້ວຍໂຕສະກົດ. ແບບການຈັດດັ່ງກ່າວ ແມ່ນອີງໃສ່ລະບົບໜ່ວຍສຽງຂອງພາສາລາວ ບໍ່ແມ່ນເອົາຮູບໂຕໜັງສືທີ່ບາງໂຕມີຮູບຄ້າຍກັນແມ່ນຈັດໄວ້ນຳກັນດັ່ງຜ່ານມາ. ແບບການຈັດລຽງຄຳທີ່ໃຊ້ໃນວັດຈະນານຸກົມນີ້ແມ່ນໄດ້ຮັບການຕົກລົງຈາກສະພາວິທະຍາສາດຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດໃຫ້ໃຊ້ໃນການເຮັດວັດຈະນານຸກົມພາສາລາວດັ່ງກ່າວ ເພື່ອໃຫ້ມີແບບແຜນທີ່ສອດຄ່ອງກັບວິທະຍາສາດຫຼາຍຂຶ້ນ. ພ້ອມນີ້ ສຳລັບພະຍັນຊະນະ ຫນ-ໜ, ຫມ-ໝ, ຫລ-ຫຼ ແມ່ນໃຫ້ໃຊ້ພຽງຮູບຂຽນດຽວຄື: ໜ, ໝ, ຫຼ; ສຳລັບສະຫຼະ ໄx-xັຍ, xຳ-xັມ ແມ່ນໃຫ້ໃຊ້ຮູບຂຽນດຽວຄື: ໄx ແລະxຳ.

3. ການຈັດລຳດັບພະຍັນຊະນະ, ສະຫຼະແລະໂຕສະກົດມີດັ່ງນີ້:

1) ການຈັດລຳດັບພະຍັນຊະນະ:

ກ ຂ ຄ ຫງ ງ ຈ ສ ຊ ຫຍ ຍ ດ ຕ
ຖ ທ ໜ ນ ບ ປ ຜ ພ ຝ ຟ ໝ ມ
ຢ ຣ ຫຼ ລ ຫວ ວ ຫ ອ ຮ

2). ການຈັດລຳດັບໂຕສະກົດດັ່ງນີ້:

ກ ງ ຍ ດ ນ ບ ມ ວ

3). ການຈັດລຳດັບສະຫຼະ

ການລຳດັບສະຫຼະຂອງວັດຈະນານຸກົມສະບັບນີ້ແມ່ນໄດ້ອີງຕາມໝວດຂອງສະຫຼະຕົ້ນແຕ່ລະໂຕແລະເອົາໂຕສະກົດທີ່ມີ 8 ໂຕ ມາປະສົມແລ້ວລຳດັບຕາມໝວດຂອງໂຕສະກົດດັ່ງນີ້:

| **ສະຫຼະ** | **ສະຫຼະ** | **ສະຫຼະ** | **ສະຫຼະ** | **ສະຫຼະ** | **ສະຫຼະ** |
|---|---|---|---|---|---|
| xະ | xາ | xິ | xີ | xຶ | xື |
| xັກ | xາກ | xິກ | xີກ | xຶກ | xືກ |

| | | | | | |
|---|---|---|---|---|---|
| xັງ | xາງ | xິງ | xີງ | xຶງ | xືງ |
| ໄx, ໃx | xາຍ | | | xຶຍ | |
| xັດ | xາດ | xິດ | xີດ | xຶດ | xືດ |
| xັນ | xານ | xິນ | xີນ | xຶນ | xືນ |
| xັບ | xາບ | xິບ | xີບ | xຶບ | xືບ |
| xໍາ | xາມ | xິມ | xີມ | xຶມ | xືມ |
| ເxົາ | xາວ | xິວ | xີວ | | |

| | | | | | |
|---|---|---|---|---|---|
| xຸ | xູ | ເxະ | ເx | ແxະ | ແx |
| xຸກ | xູກ | ເxັກ | ເxກ | ແxັກ | ແxກ |
| xຸງ | xູງ | ເxັງ | ເxງ | ແxັງ | ແxງ |
| xຸຍ | xູຍ | ເxັຍ | ເxຍ | | |
| xຸດ | xູດ | ເxັດ | ເxດ | ແxັດ | ແxດ |
| xຸນ | xູນ | ເxັນ | ເxນ | ແxັນ | ແxນ |
| xຸບ | xູບ | ເxັບ | ເxບ | ແxັບ | ແxບ |
| xຸມ | xູມ | ເxັມ | ເxມ | ແxັມ(ບໍ່ໄດ້ໃຊ້) | ແxມ |
| | | | ເxວ | ແxັວ | ແxວ |

| | | | | | |
|---|---|---|---|---|---|
| ໂxະ | ໂx | ເxາະ | xໍ | ເxິ | ເxີ |
| xົກ | ໂxກ | xັອກ | xອກ | ເxິກ | ເxີກ |
| xົງ | ໂxງ | xັອງ | xອງ | ເxິງ | ເxີງ |
| | ໂxຍ | xັອຍ(ບໍ່ໄດ້ໃຊ້) | xອຍ | ເxິຍ | ເxີຍ |
| xົດ | ໂxດ | xັອດ | xອດ | ເxິດ | ເxີດ |
| xົນ | ໂxນ | xັອນ(ບໍ່ໄດ້ໃຊ້) | xອນ | ເxິນ | ເxີນ |
| xົບ | ໂxບ | xັອບ | xອບ | ເxິບ | ເxີບ |
| xົມ | ໂxມ | xັອມ(ບໍ່ໄດ້ໃຊ້) | xອມ | ເxິມ | ເxີມ |
| ໂxວະ(ບໍ່ໄດ້ໃຊ້) | ໂxວ | | | | |

| | | | | | |
|---|---|---|---|---|---|
| ເໂ້ຍ | ເxຍ | ເືອ | ເືອ | ົວະ | ົວ |
| ຫ້ຽກ (ບໍ່ໄດ້ໃຊ້) | xຽກ | ເືອກ(ບໍ່ໄດ້ໃຊ້) | ເືອກ | ຫ້ອກ | xອກ |
| ຫ້ຽງ (ບໍ່ໄດ້ໃຊ້) | xຽງ | ເືອງ (ບໍ່ໄດ້ໃຊ້) | ເືອງ | ຫ້ອງ(ບໍ່ໄດ້ໃຊ້) | xອງ |
| | | ເືອຍ(ບໍ່ໄດ້ໃຊ້) | ເືອຍ | ຫ້ອຍ(ບໍ່ໄດ້ໃຊ້) | xອຍ |
| ຫ້ຽດ (ບໍ່ໄດ້ໃຊ້) | xຽດ | ເືອດ(ບໍ່ໄດ້ໃຊ້) | ເືອດ | ຫ້ອດ | xອດ |
| ຫ້ຽນ (ບໍ່ໄດ້ໃຊ້) | xຽນ | ເືອນ(ບໍ່ໄດ້ໃຊ້) | ເືອນ | ຫ້ອນ | xອນ |
| ຫ້ຽບ (ບໍ່ໄດ້ໃຊ້) | xຽບ | ເືອບ(ບໍ່ໄດ້ໃຊ້) | ເືອບ | ຫ້ອບ(ບໍ່ໄດ້ໃຊ້) | xອບ |
| ຫ້ຽມ (ບໍ່ໄດ້ໃຊ້) | xຽມ | ເືອມ(ບໍ່ໄດ້ໃຊ້) | ເືອມ | ຫ້ອມ(ບໍ່ໄດ້ໃຊ້) | xອມ |
| | xຽວ | | | | |

4. ການຈັດລຳດັບຊະນິດຄຳ

ບາງຄຳ ເຊິ່ງເປັນໄດ້ທັງຄຳນາມ, ກຳມະແລະຄຸນນາມຫຼືຄຳວິເສດແມ່ນໄດ້ຈັດຄຳນາມໄວ້ກ່ອນ, ຖັດໄປແມ່ນຄຳກຳມະ, ຄຳວິເສດຫຼືຄຳຄຸນນາມ. ໂດຍຢ່າງດັ່ງນີ້:

**ເຂົ້າ 1 ນ.** ທາດແປ້ງຊະນິດເປັນເມັດໂດຍສ່ວນຫຼາຍເປັນສີຂາວເກີດຈາກພືດລົ້ມລຸກປະເພດໃບແຫຼມສຳລັບໃຊ້ເມັດເປັນອາຫານທີ່ສຳຄັນຂອງມະນຸດແລະສັດຈຳນວນໜຶ່ງ ເຊັ່ນ: ເຂົ້າກ່ຳ, ເຂົ້າງັນ, ເຂົ້າແດງ, ເຂົ້າໄກ່ນ້ອຍ, ເຂົ້າດໍ.

**ເຂົ້າ 2 ກ.** ໄປສູ່ທາງໃນ, ເຮັດໃຫ້ໄປທາງໃນ ເຊັ່ນ: ເຂົ້າເຮືອນ, ເຂົ້າປະຕູ.

ສຳລັບຄຳທີ່ມີຄວາມໝາຍຄືຫຼືຄ້າຍຄືກັນນັ້ນ ແມ່ນໄດ້ໃຫ້ຄຳນິຍາມແກ່ຄຳທີ່ໄດ້ຮັບການກຳນົດໃຫ້ເປັນຄຳຫຼັກ, ສ່ວນຄຳທີ່ຖືເປັນຄຳຮອງຈະໃຊ້ເຄື່ອງໝາຍໃຫ້ໄປເບິ່ງຄຳນິຍາມຂອງຄຳຫຼັກ ເຊັ່ນ: ຄຳວ່າ ໂມຍ ແລະ ມອຍ .ໃນນີ້ໄດ້ຖືເອົາ ມອຍ ເປັນຄຳຫຼັກ ໄດ້ໃຫ້ຄຳນິຍາມແກ່ຄຳວ່າ: ມອຍ, ສ່ວນຄຳວ່າ ໂມຍ ຖືເປັນຄຳຮອງ ໄດ້ໃຊ້ເຄື່ອງໝາຍໃຫ້(ເບິ່ງ ມອຍ).

5. ການໃຊ້ເຄື່ອງໝາຍສຳລັບການຂຽນ

ເຄື່ອງໝາຍວັກ, ຕອນທີ່ໃຊ້ໃນອັກຂະຫຼະວິທີຂອງພາສາລາວທຸກປະການແມ່ນໄດ້

ນຳມາໃຊ້ຕາມກຳລະນີໂດຍປະຕິບັດຕາມຫຼັກທີ່ກຳນົດໄວ້ໃນປຶ້ມໄວຍາກອນລາວທີ່ພິມໃນປີ 1967 ພະແນກສຶກສາສູນກາງ, ຂຽນໂດຍທ່ານ ພູມີ ວົງວິຈິດ ເປັນພື້ນຖານແລະອັກຂະຫຼະວິທີທີ່ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາຈັດພິມອອກໃນປີ 2000 ເຄື່ອງໝາຍຕ່າງໆສຳລັບການຂຽນທີ່ໃຊ້ໃນວັດຈະນານຸກົມນີ້ມີຄື:

| ເຄື່ອງໝາຍ | ວິທີໃຊ້ |
|---|---|
| ຈ້ຳ(.) | ໃຊ້ໝາຍບ່ອນໝົດປະໂຫຍກຫຼືໝົດວັກ. |
| ຈຸດ (,) | ໃຊ້ຂັ້ນຄຳທີ່ນຳມາສະເໜີເປັນໝວດ, ຂັ້ນວັກຫຼືຕອນທີ່ແມ່ນເລື່ອງດຽວກັນ. |
| ຈ້ຳຈຸດ(;) | ໃຊ້ໝາຍຂັ້ນຕອນ ເຊິ່ງບໍ່ທັນໝົດເລື່ອງຫຼືບໍ່ທັນໝົດຄວາມທີ່ຈະເວົ້າ. |
| ສອງຈ້ຳ(:) | ໃຊ້ຢູ່ຫຼັງຂອງຄຳຕໍ່ ເຊິ່ງໃຫ້ຮູ້ວ່າ ຈະເວົ້າສິ່ງໃດໜຶ່ງຕໍ່ໄປນີ້. |
| ສາມຈ້ຳ(...) | ໃຊ້ບອກວ່າ ຍັງມີຄຳດັ່ງດຽວກັນອີກຫຼາຍຄຳ. |
| ວົງເລັບ(...) | ໃຊ້ໝາຍຄຳຊີ້ແຈງ, ພິ່ມເຕີມ, ພິເສດ, ໃຫ້ຄຳຂຽນຫຼືເວົ້າຕາມທີ່ຢູ່ກອນວົງເລັບ. |
| ໝາຍຊ້ຳ(ໆ) | ໃຊ້ຊ້ຳຄຳໃດໜຶ່ງ. |
| ໝາຍ(~) | ໃຊ້ໝາຍຄຳຄ້າຍຄືກັນ(synonym). |

ໃນວັດຈະນານຸກົມພາສາລາວເຫຼັ້ມນີ້ ການໃຊ້ເຄື່ອງໝາຍວັກຕອນແຕ່ລະຢ່າງນີ້ແມ່ນໃຊ້ໝາຍໃນຖ້ອຍຄຳ, ປະໂຫຍກ ໂດຍປະຕິບັດຕາມຫຼັກສະເພາະດັ່ງລຸ່ມນີ້:

1). ເຄື່ອງໝາຍຈຸດ(,), ຈ້ຳຈຸດ(;), ສອງຈ້ຳ(:) ແມ່ນໃຊ້ແປະຫຼັງຄຳໃດໜຶ່ງແລ້ວຍະຫວ່າງໜຶ່ງໂຕອັກສອນ ຈຶ່ງຕິຄຳໃໝ່.

**ໂຕຢ່າງ: ຖານກອນ ນ.** ຈຸດຕ່າງໆຢູ່ໃນປາກຂອງຄົນ ເຊິ່ງເປັນໂຕປັບ, ກະຕຸ້ນ, ກັກຫຼືຫຸບໃນເວລາອອກສຽງພາສາ ພາໃຫ້ເກີດເປັນຄຳ ໄດ້ແກ່ ຮີມປາກ, ເຫືອກ, ດຸມ, ເຟັນ, ແຂ້ວ, ເພດານປາກ, ລີ້ນ, ລີ້ນໄກ່, ກົກລີ້ນ,ປາຍລີ້ນ. ຄຳທາງວິຊາການວ່າ: Articulator.

2). ວົງເລັບ(... ) ແມ່ນໃຊ້ກັບຄຳທີ່ຈຳເປັນເອົາຄຳວິຊາການໃດໜຶ່ງມາຢັ້ງຢືນ ໂດຍສະເພາະແມ່ນຄຳທີ່ເປັນຊື່ຂອງສະຖານທີ່, ຊື່ຄົນ, ຊື່ທາງວິທະຍາສາດ, ເຕັກນິກແລະວິຊາການທີ່ສາກົນໃຊ້.

ການໃຊ້ວົງເລັບໃນຄຳອະທິບາຍ ແມ່ນໃຊ້ຖັດໂຕອັກສອນສຸດທ້າຍຂອງຄຳ ໂດຍບໍ່ຍະຫວ່າງ, ເມື່ອອັດວົງເລັບກໍ່ຕີໂຕອັກສອນຂອງຄຳໃໝ່ຖັດໄປເລີຍ ໝາຍວ່າ ລະຫວ່າງວົງເລັບທີ່ອັດແລະອັກສອນທີ່ຕີຖັດໄປບໍ່ໄດ້ຍະຫວ່າງ.

**ໂຕຢ່າງ**: **ລາງ ນ.** ສັນຍານບອກເຫດດີຫຼືຮ້າຍ, ສິ່ງທີ່ສະແດງໃຫ້ຮູ້ກ່ອນຈະມີອັນເກີດຂຶ້ນອາດດີຫຼືຮ້າຍຢ່າງໃດໜຶ່ງ(ຕາມຄວາມເຊື່ອ).

3). ການໃຊ້ຄຳເຊື່ອມ, ຄຳຕໍ່(ແລະ, ກັບ, ຫຼື, ກໍ່, ພວມ, ເຊິ່ງ, ນຳ)ແມ່ນອີງໃສ່ຫຼັກການຂຽນໃນປຶ້ມໄວຍາກອນລາວ 1967 ຂອງສຶກສາສູນກາງ, ຂຽນໂດຍທ່ານ ພູມີ ວົງວິຈິດ ເຊິ່ງໃຊ້ຕິດກັບຄຳອື່ນໃນປະໂຫຍກທີ່ມີຄວາມຕໍ່ເນື່ອງ ໝາຍວ່າ ໃຊ້ຄືກັບຄຳທົ່ວໄປໂດຍບໍ່ຖືເປັນສິ່ງພິເສດທີ່ຕ້ອງກຳນົດຫຼັກການຂຽນໃຫ້ສະເພາະ.

4). ຄຳບົ່ງບອກ(ຄື, ເຊັ່ນ, ໂຕຢ່າງ, ສົມມຸດ, ເອີ້ນ)ໃຊ້ດັ່ງນີ້:

| ຄຳບົ່ງບອກ | ວິທີໃຊ້ |
|---|---|
| ໂຕຢ່າງ | ໃຊ້ກັບສິ່ງ, ກໍລະນີທີ່ມີຈິງ. |
| ສົມມຸດ | ໃຊ້ກັບສິ່ງ, ກໍລະນີທີ່ເປັນການອຸປະມາ, ທຽບເອົາ, ກະເອົາ. |
| ເຊັ່ນ | ໃຊ້ກັບກໍລະນີບົ່ງບອກເລື່ອງນັ້ນໆ, ສິ່ງນັ້ນຫຼືສິ່ງເຫຼົ່ານັ້ນວ່າມີແນວນັ້ນຫຼືແບບນັ້ນ. |
| ຄື | ໃຊ້ໃນກໍລະນີທີ່ອ້າງເຖິງສິ່ງໃດໜຶ່ງ, ຄຳໃດໜຶ່ງຫຼືເລື່ອງໃດໜຶ່ງ. |

**ສອງຈ້ຳ**: ສອງຈ້ຳແມ່ນໃຊ້ວາງດ້ານຫຼັງຂອງຄຳໃດໜຶ່ງແລ້ວຍະຫວ່າງໜຶ່ງໂຕອັກສອນຈຶ່ງຕີຄຳອື່ນໃສ່ຕໍ່.

5). ເຄື່ອງໝາຍສາມຈ້ຳ(...)ແມ່ນໃຊ້ກັບກໍລະນີທີ່ຢາກບອກວ່າ: ຍັງມີຊະນິດດຽວກັນນີ້ອີກຫຼາຍຄຳ.

6). ເຄື່ອງໝາຍຊ້ຳ(ໆ)ໃຊ້ບອກການຊ້ຳຄຳນັ້ນໆ. ຄຳທີ່ຊ້ຳສະເພາະນັ້ນມີຈຳນວນບໍ່ຫຼາຍປານໃດເຊິ່ງເຫັນມີຄື: ຕ່າງໆ, ອື່ນໆ, ໃຜໆ, ເລື້ອຍໆ, ຕຶກໆ. ນອກນັ້ນແມ່ນຄຳທີ່ເປັນໂຕກຳໃນປະໂຫຍກຫຼືວະລີ.

6. ການຈັດວາງຄຳຂອງຊື່ສະຖານທີ່, ບຸກຄົນທີ່ສາກົນໃຊ້.

ໄດ້ແກ່ ຄຳກ່ຽວກັບທະເລ, ປະເທດ, ພູ, ແມ່ນ້ຳ, ຄອງນ້ຳທີ່ສຳຄັນ, ໜອງໃຫຍ່ ເຊິ່ງເປັນຊື່ທີ່ສາກົນໃຊ້ແມ່ນຈັດຕາມພະຍັນຊະນະຕົ້ນຄຳຂອງຄຳນັ້ນໆເຂົ້າຕາມໝວດພະຍັນຊະນະແຕ່ລະໝວດ.

7. ການຈັດລຳດັບພະຍັນຊະນະ

ພະຍັນຊະນະ 6 ໂຕ ເຊັ່ນ: ຫຍ, ຫງ, ຫວ, ໜ, ໝ ເຊິ່ງໃນວັດຈະນານຸກົມພາສາລາວສະບັບຕ່າງໆທີ່ເຮັດຜ່ານມາເຄີຍຈັດໄວ້ລຽນຕິດກັນເປັນຊຸດ ແຕ່ໃນວັດຈະນານຸກົມພາສາລາວສະບັບນີ້ແມ່ນໄດ້ຈັດຕາມໜ່ວຍສຽງພະຍັນຊະນະທີ່ເປັນຄູ່ກັນຕາມຄູ່ໃດຄູ່ນັ້ນ ເພື່ອໃຫ້ສະດວກໃນການຫາຄຳແລະບໍ່ໃຫ້ເກີດການຊ້ຳຄຳເກົ່າ ເຊິ່ງການຈັດເປັນດັ່ງນີ້:

| | |
|---|---|
| ຂ | ຄ |
| ຫງ | ງ |
| ສ | ຊ |
| ຫຍ | ຍ |
| ຖ | ທ |
| ໜ | ນ |
| ຜ | ພ |
| ຝ | ຟ |
| ໝ | ມ |
| ຫຼ | ລ |
| ຫວ | ວ |

1). ການໃຊ້ພະຍັນຊະນະສຽງສູງຂອງພາສາລາວໂຕທີ່ມີຮູບຊຽນເປັນສອງແນວມີ: ຫລ~ຫຼ, ຫນ~ໜ, ຫມ~ໝ ໃນວັດຈະນານຸກົມເຫຼັ້ມນີ້ ໄດ້ຕົກລົງໃຊ້ພຽງໂຕໜຶ່ງໃນສອງຮູບຊຽນນັ້ນຄື:

24 / VII ຫ້າມຈຳໜ່າຍ

ຫລ~ຫຼ ຕົກລົງໃຊ້ພຽງ ຫຼ

ຫນ~ໜ ຕົກລົງໃຊ້ພຽງ ໜ

ຫມ~ໝ ຕົກລົງໃຊ້ພຽງ ໝ

**ສາເຫດ**: ໜ່ວຍສຽງໂຕຈິງໃນການອອກຂອງອັກສອນແຕ່ລະໂຕນີ້ແມ່ນໜ່ວຍສຽງດຽວ, ການທີ່ໜ່ວຍສຽງດຽວແຕ່ຂຽນໃຊ້ອັກສອນສອງໂຕພາໃຫ້ມີຜູ້ວ່າ ເປັນອັກສອນປະສົມຫຼືພະຍັນຊະນະປະສົມແລະໃນການໃຊ້ສະກົດໂຕຈິງມີຫຼາຍກໍລະນີອ່ານອອກເປັນສອງແບບໄດ້ ເຊັ່ນ: ແຫວ, ແຫງ, ເຫວ, ແຫນ ແລະອື່ນໆ. ການຕົກລົງໃຊ້ ໜ, ໝ, ຫຼ ທີ່ເປັນຮູບອັກສອນດຽວນີ້ມີຄວາມກະທັດຮັດ ມີລັກສະນະວິທະຍາສາດເຊິ່ງສອດຄ່ອງກັບສຽງດຽວອັກສອນດຽວ. ດ້ານປະຫວັດອັກສອນ ໜ, ໝ, ຫຼ ສາມຮູບນີ້ ໄດ້ຮັບການສ້າງຂຶ້ນດົນນານແລ້ວໃນປະຫວັດໜັງສື ລາວ, ຮູບຂຽນກໍ່ງາມ ເມື່ອນຳສະຫຼະມາປະກອບກໍ່ອ່ານອອກໄດ້ແບບດຽວ, ຈະບໍ່ເກີດບັນຫາວ່າ ຮູບຂຽນແນວດຽວ ສາມາດອ່ານໄດ້ສອງແບບຕໍ່ໄປອີກ.

ການຂຽນບາງສຽງສະຫຼະ

ສະຫຼະ / aj / ແລະ / am / ເມື່ອກ່ອນຖືເປັນສະຫຼະພິເສດ ໂຕຈິງບໍ່ແມ່ນສະຫຼະພິເສດເພາະມັນແມ່ນສະຫຼະປະສົມຊະນິດໜຶ່ງທີ່ມີສະຫຼະກັບໂຕສະກົດ. ໃນພາສາລາວຜ່ານມາມີໂຕຂຽນສອງຢ່າງຄື: ໄx/aj / ຂຽນເປັນ ໄx, xັຍ ແລະ xໍາ/ am / ຂຽນເປັນ xໍາ - xັມ ໃນວັດຈະນານຸກົມພາສາລາວເຫຼັ້ມນີ້ໄດ້ປະຕິບັດຕາມຫຼັກທີ່ກຳນົດໃຊ້ໃນລະບົບການສຶກສາຂອງລັດຖະບານລາວ ເຊິ່ງໜ່ວຍສຽງ /aj / ໃຊ້ພຽງໂຕຂຽນ ໄx ແລະ /am/ ໃຊ້ພຽງໂຕຂຽນ xໍາ.

2).ການຈັດລຳດັບໃຫ້ອັກສອນຄວບໃນພາສາລາວມີ 14 ໂຕ ຄື: ກວ, ຂວ, ຄວ, ງວ, ສວ, ຊວ, ຕວ, ຖວ, ທວ, ຍວ, ລວ, ຮວ, ອວ, ຫວ ໃນວັດຈະນານຸກົມເຫຼັ້ມນີ້ໄດ້ຈັດໄວ້ລຳດັບສຸດທ້າຍຂອງບັນດາຄຳທີ່ໃຊ້ພະຍັນຊະນະຕົ້ນໂຕທີ່ບໍ່ຄວບ.

3). ການສະກົດຄຳທີ່ເປັນຊື່ໃຊ້ໃນສາກົນໂດຍສະເພາະຊື່ປະເທດ, ນະຄອນຫຼວງ, ແມ່ນ້ຳ, ທະເລ, ພູ, ຫາດເຄມີ ເປັນຕົ້ນແມ່ນໃຊ້ຫຼັກການສະກົດຕາມຮູບຄຳຂອງຄຳນັ້ນໆ.

ແຕ່ຊື່ສະເພາະບາງຄຳໂດຍສະເພາະແມ່ນຄຳທີ່ມີພະຍັນຊະນະຕົ້ນຄຳເປັນພະຍັນຊະນະປະສົມ ມີສະຫຼະປະກອບແມ່ນ ເx, ໄx, ໂx ຫຼື ແx ເຊັ່ນ: Crek, Proton, Brom...ເມື່ອຂຽນຕາມຫຼັກການສະກົດຂອງອັກສອນລາວແມ່ນໄດ້ເພີ່ມສະຫຼະ xະ ເຂົ້າໃສ່ພະຍັນຊະນະຕົ້ນເພື່ອ

ໃຫ້ອ່ານໄດ້ພຽງແບບດຽວແລະໄດ້ສຽງທີ່ໃກ້ຄຽງກັບສຽງຂອງຄຳນັ້ນໆຫຼາຍທີ່ສຸດ ເຊັ່ນ: Proton ສະກົດເປັນ: ປະໂຣຕົງ , Crek ສະກົດເປັນ: ກະເຣັກ Brom ສະກົດເປັນ: ບະໂຣມ ເຖິງວ່າຮູບພະຍັນຊະນະປະສົມຂອງຄຳທີ່ຮັບມາຖືກປ່ຽນແຕ່ ຄວາມໝາຍຂອງຄຳນັ້ນບໍ່ໄດ້ປ່ຽນແລະບໍ່ເຮັດໃຫ້ການອ່ານຄຳນັ້ນໆໄດ້ສອງແບບ ດັ່ງ: ເກຣັກ, ໂປຣຕົງ.

8. ການຂຽນຄຳຊ້ຳທີ່ເປັນຄຳຫຼັກ: ແມ່ນຂຽນຄຳນັ້ນຫຼືພະຍາງນັ້ນແບບເຕັມຮູບຊ້ຳຄຳ ເຊັ່ນ: ເລື້ອຍເລື້ອຍ, ຕຶກຕຶກ, ຈວາກຈວາກ, ນານາ...ໃນກໍລະນີເປັນຄຳຫຼັກ ແຕ່ເມື່ອໃຊ້ເຂົ້າໃນການຂຽນແມ່ນສາມາດໃຊ້ເຄື່ອງໝາຍຊ້ຳ(ໆ)ແທນຕາມກໍລະນີຫຼືຕາມບໍລິບົດນັ້ນ.

9.ສຳລັບຄຳທີ່ເວົ້າໄດ້ສອງແບບ ເຊິ່ງເປັນຄຳທຳມະດາ ເຊັ່ນ: ໂຕ-ຕົວ; ເໝີດ-ໝົດແລະຄຳທີ່ເປັນຊື່ປະເທດ ເຊັ່ນ: ຊູແອັດ-ສະວີເດັນ; ໂຣນລັງ-ນີເທີແລັນ; ນູແວນເຊີລັງ-ນິວຊີແລນແລະອີກບາງຄຳນັ້ນ ໃນວັດຈະນານຸກົມນີ້ໄດ້ບັນຈຸທຸກຄຳນີ້ໃສ່ ແຕ່ໄດ້ເອົາຄຳໃດທີ່ມີຄວາມເກົ່າກວ່າ ເຊິ່ງຄົນເຄີຍເວົ້າຫຼືໃຊ້ຂຽນມາກ່ອນນັ້ນໃຫ້ເປັນຄຳຫຼັກ ສ່ວນຄຳທີ່ຖັດຫຼືຕາມນັ້ນກໍ່ສາມາດໃຊ້ໄດ້ເຊັ່ນກັນ ເຊິ່ງຂຶ້ນກັບກໍລະນີທີ່ເຫັນວ່າເໝາະສົມ ໝາຍວ່າ ບໍ່ໄດ້ຕັດສິນໃຫ້ໃຊ້ພຽງຄຳໜຶ່ງດຽວ ພຽງແຕ່ເວລາໃຫ້ຫາກໃຊ້ຄຳໃດທີ່ເໝາະກໍ່ສົມຄວນໃຊ້ຄຳນັ້ນຢ່າງດຽວໃນກໍລະນີນັ້ນໆຈຶ່ງຈະບໍ່ເກີດຄວາມສັບສົນດ້ານສຳນວນແລະການຕີຄວາມໝາຍ.

10. ການປະກອບຮູບ: ການປະກອບຮູບຕ່າງໆແມ່ນຊ່ວຍຊີ້ແຈງຮ່ວມກັບຄຳນິຍາມ ເຊິ່ງມີຮູບຂອງສິ່ງຂອງ, ພືດ, ສັດ, ແມງທີ່ບໍ່ສູ້ເຫັນຫຼືຫາຍາກແລະແຜນທີ່ຂອງບາງປະເທດທີ່ເຫັນວ່າມີຄວາມຈຳເປັນແລະຕ້ອງການ.

11. ຄຳທີ່ເປັນຊື່ຂອງປະເທດ, ຊື່ເມືອງຫຼວງຂອງປະເທດທີ່ເອົາເປັນຄຳຫຼັກແມ່ນ ໄດ້ຂຽນເປັນອັກສອນລາວ, ໃນສ່ວນຄຳຊີ້ແຈງແມ່ນໃຊ້ຄຳຝຣັ່ງແລະອັງກິດນຳ ເນື່ອງຈາກວ່າໃນສະໄໝປັດຈຸບັນ ຄຳທັງສອງພາສານີ້ໄດ້ໃຊ້ຢ່າງກວ້າງຂວາງໃນສາກົນແລະໃນວຽກງານດ້ານຕ່າງໆຂອງສັງຄົມ ເຊິ່ງຜູ້ໃຊ້ຈະມີຂໍ້ມູນດ້ານຄຳສັບເພື່ອເລືອກໃຊ້ຕາມຄວາມຕ້ອງການ; ສ່ວນຄຳທີ່ເປັນຊື່ຂອງສັດຫຼືແມງແມ່ນເອົາຊື່ສະເພາະມາເປັນຄຳຫຼັກ ເຊັ່ນ: ເສືອ, ໝີ, ແມວ, ເຜິ້ງ, ຕໍ່, ແຕນ... ພ້ອມນີ້ກໍ່ນຳຄຳວ່າ ໂຕ ເຊິ່ງເປັນຄຳນຳໜ້ານາມ ເຊັ່ນ: ໂຕເສືອ, ໂຕໝີ, ໂຕເຜິ້ງ, ໂຕຕໍ່, ໂຕແຕນ... ໄປໃສ່ໄວ້ທ້າຍຂອງຄຳຊີ້ແຈງຫຼືຄຳອະທິບາຍເພື່ອໃຫ້ຜູ້ໃຊ້ມີໂຕເລືອກໃຊ້ຕາມກໍລະນີຫຼືຕາມບໍລິບົດ.

# ສາລະບານ

ລຳດັບພະຍັນຊະນະ ໜ້າ


ກ........ 1
ຂ........ 106
ຄ........ 140
ຫງ........ 183
ງ........ 186
ຈ........ 202
ສ........ 245
ຊ........ 330
ຫຍ........ 365
ຍ........ 370
ດ........ 389
ຕ........ 410
ຖ........ 462
ທ........ 474
ໜ........ 507
ນ........ 517
ບ........ 555
ປ........ 591
ຜ........ 645
ພ........ 667
ຝ........ 707
ຟ........ 714
ໝ........ 720
ມ........ 738
ຢ........ 787
ຣ........ 795
ຫຼ........ 797
ລ........ 808
ຫວ........ 854
ວ........ 860
ຫ........ 892
ອ........ 918
ຮ........ 981

# ກ

**ກ.** ພະຍັນຊະນະໂຕໜຶ່ງຂອງອັກສອນລາວ, ຈັດຢູ່ໃນໝວດອັກສອນກາງ ໃຊ້ເປັນໂຕສະກົດໃນແມ່ກົກ, ເປັນພະຍັນຊະນະຕົ້ນໃນວັດຈະນານຸກົມພາສາລາວ.

**ກຊ.** ໂຕຫຍໍ້ຈາກຄວາມວ່າ: ກະຊວງ.

**ກທ.** ໂຕຫຍໍ້ຈາກຄວາມວ່າ: ກອງທັບ.

**ກພ.** ໂຕຫຍໍ້ຈາກຄວາມວ່າ: ກຳແພງນະຄອນ.

**ກະ 1 ກ.** ປະມານ, ຄາດຄະເນໃຊ້ກັບເວລາແລະຈຳນວນ. ໂຕຢ່າງ: ມື້ອື່ນກະວ່າແປດໂມງເຊົ້າລາວອາດຈະມາຮອດ; ຈຳນວນຄົນໃນກອງປະຊຸມນີ້ກະວ່າຈະມີຊາວຄົນມາຮ່ວມ~*ຄາດ, ຕວງ.*

**ກະ 2 ກ.** ອາການທີ່ໜັງຂອງຄົນອາຍຸແກ່ເກີດລັກສະນະແຂງໆແຫ້ງໆຕາມໂຕ ເອີ້ນ ຕົກກະຫຼືອອກເມັກອອກຊາງ.

**ກະກຸ ນ.** ປູດໄມ້, ຍອດສູງສຸດຂອງສິ່ງທີ່ນູນ, ໜອກງິວ.

**ກະກຸສັນໂທ ນ.** ຊື່ຂອງພະພຸດທະເຈົ້າອົງທີ່ໜຶ່ງທີ່ມາເກີດໃນພັດທະກັບນີ້ ເອີ້ນ ພະກະກຸສັນທະ~ກະກຸສົນ.

**ກະກຸສົນ ນ.** (ເບິ່ງ ກະກຸສັນໂທ).

**ກະກຸຕະ ນ.** ຄຳສອນສຽງຂອງນົກໃນຈຳພວກນົກທີ່ຂັນເປັນສຽງ ກະກຸຕະ.

**ກະກຸທະ ນ.** ໜອກງິວ, ຫອນໄກ່(ຕົ້ນກຸ່ມ, ຕົ້ນລິ້ນໄມ້), ເຄື່ອງໝາຍຄວາມເປັນພະລາຊະກະກຸທະພັນ.

**ກະກຸທະພັນ.** (ເບິ່ງ ກະກຸທ້າ).

**ກະກຸທ້າ ນ.** ເຄື່ອງໝາຍຄວາມເປັນພະເຈົ້າແຜ່ນດິນມີຫ້າຢ່າງຄື: ມົງກຸດ, ພະຂັນໄຊສີ, ເສດຕະສັດ, ແສ້ຈຳມອນ, ສະຫຼອງພະບາດ(ເກີບຄຳ)ທັງຫ້ານີ້ ເອີ້ນ ກະກຸທ້າກຸກກຸທ້າຫຼືກະກຸທະພັນທັງຫ້າ.

**ກະເກນ ກ.** ບັງຄັບ, ສັ່ງໃຫ້ເຮັດ, ສັ່ງເອົາ, ບັງຄັບເອົາ, ເກັບເອົາໃຫ້ໄດ້ຕາມທີ່ວາງໄວ້.

**ກະກຽມ ກ.** ຈັດແຈງໄວ້ກ່ອນ, ຫ້າງໄວ້ກ່ອນຫຼືເຮັດໄວ້ລ່ວງໜ້າ ເອີ້ນ ກະກຽມຫຼືຕຽມ. ໂຕຢ່າງ: ການຈະເດີນທາງໄກເທື່ອນີ້ຕ້ອງໄດ້ກະກຽມອາຫານແລະນ້ຳດື່ມໃຫ້ຫຼາຍ; ພວກເຮົາຕຽມພ້ອມທີ່ຈະຈັດການແຂ່ງຂັນກິລາແລ່ນເພື່ອສະຫຼອງວັນບຸນກຳມະກອນສາກົນປີນີ້~*ກຽມ, ຕຽມ.*

**ກະໄດ ວ.** ດີກວ່າ ເຊັ່ນ: ອັນນີ້ກະໄດກວ່າອັນນັ້ນ, ເຈົ້າກະໄດກວ່າຂ້ອຍ~*ກ່າໄດ, ກໍ່ໄດ.*

**ກະຈະ 1 ນ.** ເລື່ອນ.

**ກະຈະ 2 ວ.** ແຈ່ມແຈ້ງ, ຂາວຜ່ອງ, ຊະໄປທົ່ວເຊັ່ນ: ຫິມະຕົກຂາວກະຈະປົກຄຸມທົ່ວພູ, ດອກຝ້າຍບານຂາວກະຈະທົ່ວໄຮ່.

**ກະຈັງ ນ.** ລວດລາຍຊະນິດໜຶ່ງສຳລັບຕິດໂລງ

ສິບ ເອີ້ນ ລາຍກະຈັງ, ລາຍວັນແລ່ນ, ວັນລີແລ່ນ.

**ກະຈັດ ວ.** ຖີ່ໆ, ບໍ່ຫ່າງ. ໃຊ້ກັບສິ່ງທີ່ເປັນດື້ວໆຫຼືເປັນເສັ້ນໆ ຕິດກັນດັ່ງແຂ້ວຟັນ, ສາດ.ໂຕຢ່າງ: ແຂ້ວຟັນນີ້ຖີ່ກະຈັດຈົນແຈບ~*ກັດຈັດ.*

**ກະຈັດກະຈາຍ ວ.** ຊະໄປທົ່ວທິບ, ຊະຊາຍຢັງຢາຍ, ຊະໄປທົ່ວ.

**ກະຈັ້ນ ວ.** ລັກສະນະທີ່ນ້ອຍແລະສັ້ນ, ບັງຄັບໃຫ້ເຮັດແລ້ວໄວໃນເວລາສັ້ນ; ບາງເທື່ອໃຊ້ເວົ້າກັບຄຳວ່າ: ກະຈໍ້ ເປັນກະຈັ້ນກະຈໍ້.

**ກະຈັບປີ່ ນ.** ເຄື່ອງດົນຕີເຮັດດ້ວຍໄມ້ຊະນິດໃຊ້ສາຍ, ໜ່ວຍເຮັດເປັນໂປ່ງ ມີຄັນສຳລັບໃສ່ສາຍເຄັ່ງຕາມຄັນເຮັດຫຼາຍ  ຂັ້ນສຳລັບແບ່ງລຳດັບສຽງໃນເມື່ອຫຼິ້ນໄດ້ຫຼາຍສຽງ; ບາງຖິ່ນວ່າ ພິນສີ່ສາຍ.

**ກະຈາ ຄ.** ກາງສຸກກາງດິບສຳລັບໝາກໄມ້ໂດຍສະເພາະໝາກແຕງລາຍເຄິ່ງສຸກເຄິ່ງດິບ, ປົນສຸກປົນດິບ; ເຄິ່ງໆກາງໆແບບ, ພາສາທີ່ໃຊ້ຄຳຂອງພາສາໂຕແລະຄຳຂອງພາສາເພິ່ນປົນກັນໄປ ເອີ້ນ ໃຊ້ພາສາຊອດກະຈາ.

**ກະຈ່າງ ວ.** ສະຫວ່າງ, ແຈ່ມແຈ້ງ.

**ກະຈາຍ ກ.** ແຜ່ອອກ, ແຈກອອກ, ຊະອອກ. ໂຕຢ່າງ: ກະຈາຍລາຍໄດ້ໄປໃຫ້ປະຊາຊົນເຂດຊົນນະບົດ; ທະຫານໄດ້ກະຈາຍກຳລັງໄວ້ຕາມຈຸດສຳຄັນຕ່າງໆ.

**ກະຈາດ ນ.** ພາຊະນະທີ່ສານດ້ວຍໄມ້ປ່ອງຮູບເຕ້ຍ ປາກກວ້າງ ສຳລັບໃສ່ສິ່ງຂອງທີ່ບໍ່ໜັກເກີນໄປ~*ກະເສາະ.*

**ກະຈົ້ນ ນ.** ຊື່ສັດສີ່ຕີນຊະນິດໜຶ່ງ ໂຕນ້ອຍຂະໜາດກະແຕ, ໜ້າແຫຼມ ມັກຢູ່ຕາມປ່າບ່ອນທີ່ມີເຄືອເຂົາທັງຕຶບໜາສຳລັບອາໄສແລະຫາກິນໝາກໄມ້ຕາມປ່າ.

**ກະຈິ ວ.** ລັກສະນະທີ່ກຳລັງຈໍ່ຈູມ, ຍອດໄມ້ຫຼືດອກໄມ້ທີ່ຫາກໍ່ປົ່ງ ເຊິ່ງຍັງຈໍ່ຈູມມີສີຂຽວເຈືອປາກົດຂຶ້ນ; ບາງເທື່ອ ເອີ້ນ ຂຽວກະຈິ.

**ກະແຈະ 1 ນ.** ແປ້ງ, ຝຸ່ນຂີ້ໝິ້ນຫຼືຝຸ່ນແກ່ນຈັນ. ສິ່ງເຫຼົ່ານີ້ຄົນບູຮານເຮັດໄວ້ເພື່ອທາໂຕ, ທາໜ້າຖ້າເຮັດດ້ວຍຝຸ່ນແກ່ນຈັນ ເອີ້ນ ກະແຈະຈັນ.

**ກະແຈະ 2 ນ.** ຊື່ແຂວງໜຶ່ງໃນປະເທດກຳປູເຈຍຢູ່ຕໍ່ແດນປະເທດລາວພາກໃຕ້.

**ກະແຈ ນ.** ຫຼີ້ມ,ໄລລັດ, ກອນປະຕູເຮືອນຄົນບູຮານເຮັດໄລປະຕູດ້ວຍໄມ້ ເອີ້ນ ຫຼີ້ມປະຕູຫຼືກອນປະຕູ~*ກຸນແຈ.*

**ກະແຈດົນຕີ ນ.** ເຄື່ອງໝາຍກຳນົດທີ່ຕັ້ງຂອງໂນດດົນຕີບົນຫ້າເສັ້ນສີ່ຫວ່າງ ເຊັ່ນ: ກະແຈຊອນ, ກະແຈໂດ, ກະແຈຟາ.

**ກະແຈມື ນ.** ກະແຈທີ່ເຮັດຂໍເປັນຮູບມົນຄູ່ໜຶ່ງໃຫ້ພໍດີກັບກົ່ວແຂນ, ໃຊ້ໂສ້ນ້ອຍເກາະໃສ່ກັນສຳລັບງັບໃສ່ກົ່ວແຂນຂອງຜູ້ຖືກໂທດ, ຜູ້ທຳຄວາມຜິດຕໍ່ບ້ານເມືອງບໍ່ໃຫ້ສາມາດໃຊ້ມືອາລະວາດໄດ້.

**ກະແຈກະຈາຍ ວ.** ລັກສະນະທີ່ມີບ່ອນລະເລັກ

ລະໜ້ອຍຫຼາຍບ່ອນ, ມີຢູ່ຢ່າງຢິ່ງຢາຍ, ມີຢູ່ໃນຫຼາຍບ່ອນໂດຍບໍ່ຂຶ້ນກັບກັນຫຼືບໍ່ກໍາກັບກັນ.

**ກະຈິກ 1 ນ.** (ເບິ່ງ ແວ່ນ).

**ກະຈິກ 2 ນ.** ອຸປະກອນໃຊ້ຂຸດດິນເຮັດດ້ວຍໂລຫະທີ່ມີຮູບລັກສະນະແປແຕ່ໂກບເຂົ້າໜ້ອຍໜຶ່ງເຮັດບ້ອງເພື່ອໃສ່ດ້າມໄມ້ຍາວປະມານໜຶ່ງຫຼາໃຫຍ່ພໍດີຈັບຫຸ້ມໄດ້ສະດວກໃຊ້ງານຂຸດດິນເຮັດສວນຜັກ, ເຮັດໄຮ່, ເຮັດນາສໍາລັບຊາວນາ, ຊາວສວນແລະກໍ່ສ້າງ.

**ກະຈິກເງົາ ນ.** (ເບິ່ງ ແວ່ນ).

**ກະໂຈກ ນ.** ຊື່ກະບອນໄມ້ປ່ອງຕັດຂັງຂໍ້ຂ້າງໜຶ່ງໃຊ້ສໍາລັບຕັກນໍ້າກິນ.

**ກະໂຈມ 1 ນ.** ໝວກທີ່ເຮັດດ້ວຍຜ້າສໍາລັບໃຫ້ເດັກນ້ອຍຖືກັນແດດ, ລົມ.

**ກະໂຈມ 2 ນ.** ໝວກສໍາລັບປະດັບຫົວທີ່ໃຊ້ເປັນເຄື່ອງຂອງເຈົ້າຊີວິດສະໄໝສັກດີນາເຈົ້ານາຍຜູ້ໃຫຍ່ຫຼືພວກນັກສະແດງລະຄອນ.

**ກະໂຈມ 3 ນ.** ໝວກສີເຫຼືອງທີ່ໃຊ້ໃນເວລາຍາດໂຍມຫົດສົງພະເຖລະໃຫ້ມີສະມະນະສັກເປັນສົມເດັດ, ຍາທ່ານ ມັກໃຊ້ໝວກສີເຫຼືອງນີ້ສຸບຫົວເວລາທີ່ຫົດສົງແລ້ວ.

**ກະໂຈມຫົວ ນ.** ສະຖານທີ່ນອນພັກຜ່ອນຊົ່ວຄາວຂອງເຈົ້ານາຍເມື່ອອອກໄປຮົບເສິກຫຼືໄປລ່າເນື້ອ(ໂທ່ເນື້ອ) ເຊິ່ງເຮັດຕັ້ງເປັນລັກສະນະເຮັດຍອດລາຍກະໂຈມຫົວ.

**ກະເຈາະກະຈອກ ກ.** ອາການທີ່ເດັກນ້ອຍສະແດງອອກໃນເວລາໄດ້ສິ່ງໃດສິ່ງໜຶ່ງ; ອາການພໍອົກພໍໃຈທີ່ສຸດຂອງເດັກທີ່ສະແດງອອກ.

**ກະຈອກ 1 ນ.** (ເບິ່ງ ນົກກະຈອກ).

**ກະຈອກ 2 ຄ.** ເສດ, ເຫຼືອ, ສິ່ງຂອງທີ່ເຫຼືອໃຊ້ແນວເລັກໆນ້ອຍໆ; ຄົນທີ່ມີຖານະຕໍ່າວາງທ່າທາງຄືວ່າມີ, ຄົນທີ່ມີຄວາມສາມາດໜ້ອຍແຕ່ມັກອວດໂຕ ເອີ້ນ ຄົນກະຈອກ.

**ກະຈອນ ນ.** ເຄື່ອງປະດັບຫູຂອງຜູ້ສາວເຮັດດ້ວຍເງິນຫຼືຄໍາທີ່ເປັນຮູບສາມລ່ຽມຄ້າຍຄືຈຽງລູກໜ້າລ່ຽມໜຶ່ງເຮັດຂໍເກາະໄວ້ສໍາລັບສອດໃສ່ຮູຕຶ່ງຫູ, ອີກດ້ານລຸ່ມເຮັດຍອຍຫຼືລູກຈູມນ້ອຍໆຫ້ອຍໃສ່ ມີສອງຊະນິດຄື: ກະຈອນຈູມແລະກະຈອນຍອຍ.

**ກະຈອນຈູມ ນ.** ຂອງເອ້ຫູຊະນິດທີ່ເຮັດເປັນຮູບຈູມຄ້າຍກັບດອກງິ້ວຫຼືດອກຊ້ອນກໍາລັງຈູມ.

**ກະຈອນຍອຍ ນ.** ຂອງເອ້ຫູ ຊະນິດທີ່ເຮັດເປັນຮູບສາມລ່ຽມຫຼືຮູບຕ່ອງແລ້ວເຮັດຍອຍຫຼາຍອັນຫ້ອຍໃສ່ເວລາຖືຍອຍຈະຍ່ອນລົງ.

**ກະຈ້ອນ 1 ນ.** ສັດຊະນິດໜຶ່ງ ຈໍາພວກກະຮອກ, ກະແຕ ແຕ່ໂຕນ້ອຍກວ່າ ມີຂົນລາຍແຊກສີຂາວພາດຢູ່ສອງຟາກຂ້າງ ນັບແຕ່ຄໍລົງຫາກົ້ນ.

**ກະຈ້ອນ 2 ຄ.** ລັກສະນະທີ່ນ້ອຍ, ແຈ້, ຜອມ. ມັກໃຊ້ສໍາລັບປຽບທຽບຮູບຊົງ ເຊັ່ນ: ຄົນທີ່ອາຍຸແກ່ແຕ່ໂຕນ້ອຍແຈ້ ມັກເອີ້ນຄົນໂຕກະຈ້ອນ; ມ້າໂຕນ້ອຍແລະຜອມ ເອີ້ນ ມ້າກະຈ້ອນຫຼືມັກໃຊ້ປຽບທຽບລັກສະນະຂອງຄົນ

ທີ່ບໍ່ເຂັ້ມແຂງຈິງຈັງວ່າ ເປັນຄົນແບບກະຈ້ອນ.

**ກະຈອບ ນ.** ເຄື່ອງມືສຳລັບໃຊ້ຂຸດດິນເຮັດເປັນສາມລ່ຽມຂະໜາດນ້ອຍແລະອ່າວບາງກວ່າຈົກ ໃຊ້ສຳລັບຂຸດດິນເຮັດໜານຜັກຫຼືເຮັດໜານດອກໄມ້.

**ກະຈອບບ້ອງ ນ.** ກະຈອບແບບເຮັດບ້ອງຍາວສຳລັບໃສ່ດ້າມ.

**ກະເຈົ້າກະຈ້າ ກ.** ສະແດງຄວາມພໍອົກພໍໃຈຢ່າງເຕັມທີ່ຂອງຜູ້ໃດໜຶ່ງຢູ່ໃນງານທີ່ຈັດຫຼືໃນການຕ້ອນຮັບແຂກ.

**ກະຈຽວ ນ.** ພືດຊະນິດໜຶ່ງ ດອກເປັນຊໍ່ຄືດອກຫວ້ານ ມັກເກີດໃນປ່າໂລ່ງທີ່ມີດິນຊຸ່ມ, ໃຊ້ດອກລວກ ກິນກັບປົ່ນ, ກັບເອາະ.

**ກະຈອນ 1 ນ.** ແປ້ງ, ຝຸ່ນ, ແປ້ງຫອມ, ແປ້ງຫອມທີ່ເຮັດດ້ວຍຝຸ່ນຂີ້ໝິ້ນຫຼືຝຸ່ນຈັນຫອມ.

**ກະຈອນ 2 ນ.** ຜົງ, ເມັດຝຸ່ນ, ໄກສອນ.

**ກະຈອນ 3 ກ.** ແຕກ, ມຸ່ນມົນ.

**ກະໄສ ນ.** ຊື່ພະຍາດຝີໃນທ້ອງຫຼືປອດແຫ້ງເຮັດໃຫ້ຮ່າງກາຍຊຸດໂຊມຈ່ອຍແຫ້ງ.

**ກະໄສການ ນ.** ເວລາສ້ຽງສູນແຫ່ງສິ່ງທັງປວງ, ເວລາໂລກດັບສູນ.

**ກະໄສຍະໂລກ ນ.** ຝີໃນທ້ອງ.

**ກະສັດ ນ.** ພະເຈົ້າແຜ່ນດິນ.

**ກະສັດຕາທິລາດ ນ.** ພະເຈົ້າແຜ່ນດິນຜູ້ຍິ່ງໃຫຍ່.

**ກະສັດຕາໄທ້ ນ.** ພະເຈົ້າແຜ່ນດິນຜູ້ປະເສີດເລີດລ້ຳ.

**ກະສັດຕີ ນ.** ນາງກະສັດ, ນາງເຊື້ອເຈົ້າ.

**ກະສັນ ກ.** ຄະນຶງເຖິງ, ຄຶດຜູກພັນຢູ່, ມີໃຈຈົດຈໍ່ຢູ່ຄຶດ, ຄຶດຮອດ, ຄຶດຢາກໄດ້ມັກແລະກະວົນກະວາຍໃນກາມະລົມ.

**ກະສາ ກ.** ຄາດຄິດວ່າຈະເຮັດສິ່ງໃດສິ່ງໜຶ່ງ.

**ກະສາບ ນ.** ເງິນຕາ, ນ້ຳໜັກເງິນຕາທີ່ເທົ່າກັບ 4 ບາດ.

**ກະສິກອນ ນ.** ຜູ້ເຮັດໄຮ່ນາສວນ, ຜູ້ເຮັດການປູກຝັງ.

**ກະສິກຳ ນ.** ການເຮັດໄຮ່, ນາແລະການປູກຝັງລ້ຽງສັດ.

**ກະສິລະ ນ.** ນ້ຳນົມ.

**ກະສິລະທາລາ ກ.** ອາການໄຫຼອອກຂອງນ້ຳນົມ, ສາຍນ້ຳນົມ.

**ກະສິງ ນ.** ນາງລະຄອນ, ນາງຟ້ອນ.

**ກະສິນ ນ.** ການຈະເລີນ; ກຳມະຖານດ້ວຍການກຳນົດສິ່ງຕ່າງໆເປັນອາລົມຄື ກຳນົດສີສີ່ຢ່າງເປັນອາລົມ, ກຳນົດອາການເປັນອາລົມ.

**ກະສີ ນ.** ການໄຖນາ, ການປູກຝັງ.

**ກະສິກະ ນ.** ຜ້າຕ່ຳດ້ວຍຝ້າຍປົນໄໝມາຈາກເມືອງກາສີຂອງປະເທດອິນເດຍ.

**ກະສຸນ ນ.** ລູກປືນ.

**ກະເສລາ ນ.** ເປັນນ້ຳສັກສິດທີ່ລ້ຽງຊີວິດໃຫ້ຊີວິດຂອງມະນຸດແລະສັດຫຼາຍຊະນິດ.

**ກະເສດ ນ.** ທີ່ດິນທົ່ງນາ, ໄຮ່, ສວນ, ດິນສຳລັບໃຊ້ໃນການປູກພືດທັນຍາຫານ.

**ກະເສດສາດ ນ.** ວິຊາວ່າດ້ວຍການກະເສດ

ເຊິ່ງຮວມເອົາວິຊາການປູກພືດແລະລ້ຽງສັດມາສຶກສາຮ່ຳຮຽນ.

**ກະເສດສຸມ ນ.** ການເຮັດນາຫຼືສວນດ້ວຍການໃຊ້ວິທະຍາການໃໝ່ ເພື່ອໃຫ້ໄດ້ຜົນຜະລິດຫຼາຍ, ການປູກພືດໃນເນື້ອທີ່ຈຳກັດແຕ່ໃຫ້ໄດ້ຜົນຫຼາຍ.

**ກະເສດຕະກອນ ນ.** ຜູ້ທຳການກະເສດ, ຜູ້ກະທຳການໄຖ, ຜູ້ເຮັດສວນ, ຜູ້ເຮັດນາ.

**ກະເສດຕະກຳ ນ.** ການເຮັດໄຮ່ໄຖນາ, ປູກພືດຜັກ, ລ້ຽງສັດ, ການຫາປາ, ການປ່າໄມ້.

**ກະເສດສາດ ນ.** ວິຊາວ່າດ້ວຍການກະເສດຕະກຳ, ວິຊາການກະເສດ.

**ກະເສມ.** (ເບິ່ງ ກະເສີມ).

**ກະແສ 1 ນ.** ສາຍນ້ຳ, ສາຍລົມທີ່ເຄື່ອນໄປ.

**ກະແສ 2 ນ.** ແສ້ຕີມ້າ, ແສ້ຫວາຍສຳລັບຕີມ້າໃຫ້ແລ່ນໄວ.

**ກະແສລົມອອກ ນ.** ຂະບວນການຂອງລົມທີ່ຖືກບັງຄັບອອກຈາກປາກດ້ວຍໂດຍການໃຊ້ອະໄວຍະວະສິ່ງລົມຈາກພາຍໃນສູ່ພາຍນອກ ໃຫ້ສຳຜັດກັບຈຸດທີ່ໃຫ້ເກີດສຽງຕ່າງໆ. ຄຳທາງວິຊາການວ່າ: Egressive Aistream.

**ກະແສລົມເຂົ້າ ນ.** ຂະບວນການຂອງການໃຊ້ອະໄວຍະດູດລົມຈາກພາຍນອກ ເຂົ້າຜ່ານປາກ ເພື່ອສຳຜັດກັບຈຸດໃດໜຶ່ງໃຫ້ເກີດສຽງຕ່າງໆ. ຄຳທາງວິຊາການວ່າ: Ingressive Airstream.

**ກະສອບ ນ.** ບັ້ງນ້ອຍໆດັ່ງສອບລູກປືນ, ເຄື່ອງສານຫຼືຕ່ຳດ້ວຍປ່ານ, ປໍຫຼືປະລາສຕິກທີ່ເປັນຮູບບັ້ງສຳລັບໃສ່ເຂົ້າແລະສິ່ງຂອງອື່ນໆ ທີ່ເປັນເມັດເປັນກ້ອນນ້ອຍ.

**ກະເສີມ 1 ນ.** ຄວາມສຳລານ, ຄວາມສຸກສະບາຍ.

**ກະເສີມ 2 ວ.** ສຳລານ, ສຳບາຍ, ສະບາຍ.

**ກະສຽນ 1 ກ.** ຊຽນ, ຊຽນຄຳແປນ້ອຍໆໄວ້ກ້ອງຫຼືທາງຂ້າງຂອງສັບເດີມ.

**ກະສຽນ 2 ກ.** ສູນໄປ, ໝົດໄປ ເຊັ່ນ: ໝົດກະສຽນອາຍຸທີ່ເປັນພະນັກງານລັດຖະການ.

**ກະສຽນອາຍຸ ນ.** ຜູ້ມີອາຍຸເຖິງເຂດແລ້ວແມ່ນ 18 ປີຂຶ້ນໄປ.

**ກະສວຍ ນ.** ເຄື່ອງໃສ່ຫຼອດສຳລັບຕ່ຳຫູກ, ຮູບຄືເຮືອກ້ານສ້ວຍ.

**ກະສວນ ນ.** ສ່ວນ, ແບບ, ແບບຢ່າງສຳລັບສ້າງຫຼືເຮັດຂອງຈິງ ເຊັ່ນ: ກະສວນເຮືອນ.

**ກະຊະ ນ.** ໄມ້ປ່າຊະນິດໜຶ່ງຕົ້ນນ້ອຍເປັນຝຸ່ມໃບໃຫຍ່ສໍ່າສາມນິ້ວມື ມັກເກີດຢູ່ຕີນພູບ່ອນຊຸ່ມຫຼືຕາມແຄມນ້ຳ.

**ກະຊັງ 1 ນ.** ເຄື່ອງສຳລັບຊັງປາໄວ້ໃນແມ່ນ້ຳເຮັດດ້ວຍໄມ້ປ່ອງເຫຼົາກົມໆແລ້ວຖັກດ້ວຍເຊືອກໃຊ້ຊັງປາໄວ້ຂາຍຫຼືຊັງເພື່ອລ້ຽງ.

**ກະຊັງ 2 ນ.** ຄຸຫຼືປ່ອມທີ່ສານດ້ວຍໄມ້ປ່ອງເປັນຮູບກົມທາດ້ວຍຂີ້ຊີໃຊ້ຕັກນ້ຳໃນສ້າງ; ບາງຖິ່ນ ເອີ້ນ ປ່ອມຕັກນ້ຳ.

**ກະຊັງ 3 ສັນ.** ກຽວຂອງ.

**ກະເຊົ້າ 1 ນ.** ພາຊະນະສານດ້ວຍໄມ້ປ່ອງສໍາລັບມ້ຽນສິ່ງຂອງເສື້ອຜ້າເປັນຕົ້ນຫ້ອຍໄວ້ພາຍໃນເຮືອນ.

**ກະເຊົ້າ 2 ນ.** ພາຊະນະສານດ້ວຍ ໄມ້ປ່ອງມີຫູໃຊ້ເຊືອກເປັນສາຍ ສໍາລັບຫາບ, ຫິ້ວຫຼືຄອນ ໃຊ້ໃສ່ສິ່ງຂອງໃນເວລາເຂົ້າປ່າໄປຫາໝາກໄມ້ ຫົວມັນຫຼືຜັກຕ່າງໆ.



**ກະເຊົ້າຂີ່ ນ.** ເຄື່ອງເຮັດຄ້າຍກະຊ້າແຕ່ສານດ້ວຍໄມ້ດົ້ວແຂງ ສໍາລັບໃຫ້ຄົນຂຶ້ນນັ່ງໄດ້ເພື່ອຂີ່ຂ້າມຟາກ.

**ກະຊ້າ ນ.** ພາຊະນະຊະນິດໜຶ່ງສານດ້ວຍໄມ້ປ່ອງສໍາລັບໃສ່ຜັກທີ່ເກັບຫຼືເຄື່ອງຕິດໂຕ ເວລາໄປເຮັດໄຮ່, ເຮັດນາ*~ຊ້າ.*

**ກະຊ້າຈັງຫັນ ນ.** ພາຊະນະຂະໜາດກາງທີ່ສານດ້ວຍໄມ້ປ່ອງຕາຫ່າງ ເຮັດສໍາລັບໃຫ້ໃສ່ອາຫານຫາບໄປຈັງຫັນ, ໄປເພນເພື່ອຖວາຍພະສົງ.

**ກະຊາກ ກ.** ສະແດງທ່າຮ້າຍອອກຢ່າງແຮງ, ໃຊ້ທ່າທີຮ້າຍແບບຖົ່ງສຽງອອກໃສ່ຫຼືທັງຍິ່ງແຂ້ວເຫຼືອກຕາໃສ່.

**ກະຊາມ 1 ນ.** ພາຊະນະປາກບານເຮັດດ້ວຍໂລຫະສໍາລັບໃສ່ນໍ້າລ້າງຜັກໃຊ້ສໍາລັບຊັກເຄື່ອງ ເຊັ່ນ: ກະຊາມເຫຼັກ, ກະຊາມຢາງ*~ອ່າງ.*

**ກະຊາມ 2 ວ.** ຈົນວ່າຈະມາຮອດ, ຈົນກວ່າຈະ ເຊັ່ນ: ກະຊາມຈະມາຮອດຕ້ອງແມ່ນສອງມື້ພຸ້ນແລ້ວ.

**ກະຊິບ ກ.** ເວົ້າສິ່ມໃສ່ຫູ, ເວົ້າຄ່ອຍໆດ້ວຍຄວາມທີ່ສັ້ນ.

**ກະຊິບກະຊາບ ກ.** ເວົ້າເລື່ອງສ່ວນໂຕຫຼືເລື່ອງລັບສິ່ມໃສ່ຫູຄ່ອຍໆທັງຟັ່ງຟ້າວ.

**ກະແຊ ນ.** ພະຍາດເຈັບທ້ອງຢ່າງໜຶ່ງເກີດອາການເຈັບສຽບ; ບາງເທື່ອ ເອີ້ນ ກັງແຊ.

**ກະໂຊ້ ນ.** ເຄື່ອງຈັກສານໃຊ້ສໍາລັບຕັກຫຼືຊະນໍ້າເຂົ້ານາ.

**ກະຊອນ ນ.** ເຄື່ອງຕອງນໍ້າສານດ້ວຍໄມ້ປ່ອງ ກົ້ນແຫຼມແລະກົ້ນຍາວ ມີຮູບຮ່າງຂະໜາດໂປະໝາກພ້າວໃຊ້ຕອງນໍ້າກະທິ, ນໍ້າປາແດກ, ນໍ້າໝໍ້ນ້ອຍ, ຢານາງທີ່ຄັ້ນໃສ່ນໍ້າແລ້ວ.

**ກະເຊີ ນ.** ພາຊະນະທີ່ສານດ້ວຍໄມ້ປ່ອງທີ່ມີຮູບຮ່າງຄ້າຍຄືກະບຸງ, ປາກກວ້າງກົ້ນຮອມ ໃຊ້ສໍາລັບຕວງເຂົ້າເປືອກເຂົ້າສານ, ອີກຢ່າງໜຶ່ງເປັນກະເຊີຊະນິດໃຫຍ່ ເອົາໃສ່ເທິງກວຽນ ໃຊ້ບັນທຸກເຂົ້າເປືອກ.

**ກະຊຽງ ນ.** ໄມ້ພາຍຍາວຊະນິດນ້ອຍຍາວເປັນຮູບກາບປີ ສໍາລັບພາຍໃຫ້ເຮືອໄປ, ໄມ້ແຂວເຮືອ, ໄມ້ແຈ້ວເຮືອ; ບາງຖິ່ນ ເອີ້ນ ກັນຊຽງ.

**ກະຊວງ ນ.** ອົງການຈັດຕັ້ງຂັ້ນສູງຫົວໜ່ວຍໜຶ່ງຂອງລັດຖະບານ ເປັນບ່ອນໂຮມໜ້າວຽກຈໍານວນໜຶ່ງທີ່ມີຄວາມກ່ຽວຂ້ອງກັນ ເຊິ່ງມີລະດັບສູງກວ່າທະບວງ, ມີຫົວໜ້າເປັນລັດຖະມົນຕີ.

**ກະຊວງກະສິກຳປ່າໄມ້ ນ.** ອົງການຂັ້ນສູງທີ່ວໜ່ວຍໜຶ່ງຂອງລັດຖະບານເຮັດໜ້າທີ່ຄຸ້ມຄອງແລະບໍລິຫານວຽກຕ່າງໆກ່ຽວກັບການປູກພືດພັນທັນຍາຫານ, ຕົ້ນໄມ້, ຈັດສັນ, ຄຸ້ມຄອງປ່າໄມ້ແລະການລ້ຽງສັດບົກ, ສັດນ້ຳຊະນິດຕ່າງໆ.

**ກະຊວງການເງິນ ນ.** ອົງການຂັ້ນສູງຂອງລັດຖະບານເຮັດໜ້າທີ່ຄຸ້ມຄອງ, ບໍລິຫານລາຍຮັບ, ລາຍຈ່າຍທີ່ເປັນວຽກຂອງລັດຖະບານ, ວຽກກ່ຽວກັບເງິນທີ່ໃຊ້ໃນທຸກສ່ວນຂອງວຽກງານທີ່ລັດກ່ຽວຂ້ອງ.

**ກະຊວງການຕ່າງປະເທດ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບການພົວພັນວຽກດ້ານຕ່າງໆລະຫວ່າງປະເທດຕົນກັບປະເທດອື່ນໂດຍໃຫ້ດຳເນີນໄປຕາມລະບົບແລະຂອບເຂດນະໂຍບາຍຂອງລັດຖະບານຂອງປະເທດຕົນໃນແຕ່ລະສະໄໝ.

**ກະຊວງສາທາລະນະສຸກ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບການດູແລສຸຂະພາບຂອງຄົນໃນຊາດດ້ວຍການປ້ອງກັນ, ປິ່ນປົວພະຍາດ, ຄວາມເຈັບປ່ວຍແລະຊຸກຍູ້ການສ້າງປັດໄຈສຳລັບໃຊ້ໃນການປິ່ນປົວພະຍາດ ເຊັ່ນ: ຢາປົວຊະນິດຕ່າງໆ; ປັດໄຈຮັກສາສຸຂະພາບ ເຊັ່ນ: ເຄື່ອງມືການແພດຊະນິດຕ່າງໆ; ສິ່ງເສີມການສ້າງຄວາມສະອາດໃນການບໍລິໂພກການດຳລົງຊີວິດຂອງມວນຊົນ.

**ກະຊວງສຶກສາທິການ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບວຽກການກໍ່ສ້າງ, ບຳລຸງຄວາມຮູ້ດ້ານຕ່າງໆໃຫ້ຄົນໃນຊາດດ້ວຍການຈັດສິ່ງຮຽນ, ການສອນ, ວິທີສອນຕະຫຼອດເຖິງການຈັດຕັ້ງທີ່ກ່ຽວກັບການຮຽນ, ການສອນແລະການຮັບຮອງຢັ້ງຢືນການຮຽນວິຊາໃນດ້ານຕ່າງໆ.

**ກະຊວງໂຍທາທິການ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບວຽກການຄົມມະນາຄົມດ້ານຕ່າງໆ ເຊັ່ນ: ທາງບົກ, ທາງນ້ຳ, ທາງອາກາດແລະການເສັ້ນທາງການສັນຈອນໃນບ້ານເມືອງຕະຫຼອດເຖິງຫຼັກການລະບຽບການຕ່າງໆກ່ຽວກັບວຽກດ້ານນີ້.

**ກະຊວງຖະແຫຼງຂ່າວ - ວັດທະນະທຳແລະທ່ອງທ່ຽວ ນ.** ອົງການຈັດຕັ້ງຂັ້ນສູງຂອງລັດຖະບານທີ່ເຮັດໜ້າທີ່ກຳກັບການເອົາເຫດການຕ່າງໆ ທີ່ເກີດໃນບ້ານເມືອງໃຫ້ເປັນຂ່າວເຜີຍແຜ່ອອກສູ່ສັງຄົມດ້ວຍສື່ຊະນິດຕ່າງໆ, ທາງຕ່າງໆແລະເຮັດວຽກກຳກັບເຄື່ອນໄຫວສ້າງກິດຈະກຳຕ່າງໆທາງປະເພນີ, ສິລະປະ, ການບັນເທີງ, ຄວາມຄຶກຄື້ນໃຫ້ແກ່ມວນຊົນແລະເຮັດວຽກກ່ຽວກັບການຈັດການບໍລິຫານການທ່ອງທ່ຽວປະເພດຕ່າງໆ ເຊັ່ນ: ການທ່ຽວພາຍໃນປະເທດ, ການທ່ຽວໄປຕ່າງປະເທດຫຼືການທ່ຽວຈາກຕ່າງປະເທດເຂົ້າມາ

ໂດຍເຮັດໃຫ້ພາລະສາມປະການທີ່ກຳກັບຖືກຕ້ອງກັບນະໂຍບາຍຂອງລັດຖະບານທີ່ກຳນົດອອກ.

**ກະຊວງປ້ອງກັນຄວາມສະຫງົບ ນ.** ອົງການຂັ້ນສູງຂອງລັດຖະບານເຮັດໜ້າທີ່ຮັກສາຄວາມສະຫງົບ, ຄວາມເປັນລະບຽບທາງສັງຄົມໃນປະເທດ, ກຳກັບການປະຕິບັດລະບຽບ, ກົດໝາຍດ້ານຕ່າງໆຂອງພົນລະເມືອງ, ຄຸ້ມຄອງພົນລະເມືອງແລະການຈັດຕັ້ງການປົກຄອງຂັ້ນຕ່າງໆ, ສືບຮູ້ແລະກຳຈັດການກະທຳຕ່າງໆຂອງບຸກຄົນ, ກຸ່ມຄົນທີ່ກະທຳຄວາມຜິດຕໍ່ກົດໝາຍ, ຕໍ່ຄວາມສະຫງົບທາງສັງຄົມແລະການປົກຄອງຂອງລັດຖະບານ.

**ກະຊວງປ້ອງກັນປະເທດ ນ.** ອົງການຂັ້ນສູງຂອງລັດຖະບານເຮັດໜ້າທີ່ປ້ອງກັນເຂດແດນຂອງປະເທດແລະພົນລະເມືອງ, ລະບອບການປົກຄອງໃຫ້ມີຄວາມໝັ້ນຄົງໂດຍມີການປະກອບອາວຸດ, ພາຫະນະເຮັດສົງຄາມໄວ້ ເພື່ອເປັນເຄື່ອງມືທີ່ມີກຳລັງແລະມີອຳນາດຫຼາຍທີ່ສຸດໃນປະເທດ.

**ກະຊວງແຜນການແລະການລົງທຶນ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບບັນດາແຜນການຂອງການກໍ່ສ້າງແລະພັດທະນາທາງເສດຖະກິດແລະສັງຄົມຂອງປະເທດ, ໄລຍະຍາວ, ໄລຍະສັ້ນ, ຄົ້ນຄວ້າຄວາມອາດສາມາດໃນການຈະປະຕິບັດໂຕຈິງພ້ອມກັບຄິດໄລ່ດ້ານຜົນປະໂຫຍດທີ່ຈະໄດ້ສ່ຳໃດຈາກກິດຈະການທີ່ຄາດວ່າຈະເຮັດໂດຍຄຳນຶງເຖິງດ້ານທີ່ຈະເກີດປະໂຫຍດຫຼາຍແກ່ບ້ານເມືອງສ່ວນລວມເປັນຫຼັກແລະຈັດສັນງົບປະມານທີ່ເປັນເງິນເປັນທຶນເຂົ້າໃສ່ແຕ່ລະກິດຈະການທີ່ເປັນແຜນການ; ຕິດຕາມປະສິດທິພາບຂອງການປະຕິບັດກິດຈະການຕ່າງໆທີ່ລົງທຶນໃຫ້ເປັນແຕ່ລະໄລຍະ.

**ກະຊວງພະລັງງານແລະບໍ່ແຮ່ ນ.** ອົງການຂັ້ນສູງຂອງລັດຖະບານ ເຮັດໜ້າທີ່ກຳກັບວຽກການກໍ່ສ້າງ, ການນຳໃຊ້ພະລັງງານທີ່ຈຳເປັນເຊັ່ນ: ໄຟຟ້າ, ນ້ຳມັນເຊື້ອໄຟ, ຖ່ານຫີນ, ອາຍແກັສໃຫ້ແກ່ການດຳລົງຊີວິດ,ການຜະລິດໂດຍສະເພາະການເດີນພາຫະນະຂົນສົ່ງ, ເຄື່ອງຈັກ, ເຄື່ອງໃຊ້ຕ່າງໆແລະວຽກງານກ່ຽວກັບບໍ່ແຮ່ ເຊິ່ງມີການສຳຫຼວດໃຫ້ຮູແຮ່ທາດຕ່າງໆທີ່ມີໃນປະເທດ, ຮູ້ແຫຼ່ງແລະປະລິມານຂອງແຮ່ທາດຕ່າງໆໃນປະເທດສຳລັບເປັນຂໍ້ມູນໃຫ້ແກ່ການສະຫງວນໄວ້ກ່ອນຫຼືໃຫ້ຂຸດຄົ້ນນຳມາໃຊ້ເປັນປະໂຫຍດແກ່ບ້ານເມືອງ.

**ກະຊວງພາຍໃນ ນ.** ອົງການຈັດຕັ້ງຂັ້ນສູງຂອງລັດຖະບານ ເຮັດວຽກກ່ຽວກັບການບໍລິຫານຄຸ້ມຄອງລັດໂດຍມີການຈັດແຈງແລະກຳກັບຫົວໜ່ວຍການຈັດຕັ້ງ, ພາລະແລະໜ້າວຽກຕະຫຼອດເຖິງບຸກຄົນທີ່ຈະປະກອບເຂົ້າເຮັດວຽກຕ່າງໆໃນອົງການ, ຫົວໜ່ວຍການຈັດ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ